ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ

Mahathuen Leasing Public Company

# ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳປີ 2023

# Annual Report 2023


ບ້ານ: ໂພນພະເນົາ ກມ5 ເລກທີ: 628

ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ

ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

Website: www.mahathuen.com

## ສາລະບານ

ໜ້າ


1. ບໍລິສັດ ມະຫາຊົນ ເຊົ່າສິນເຊື່ອ ມະຫາຊົນ ........ 1
   1.1 ຂໍ້ມູນທົ່ວໄປຂອງບໍລິສັດ ........ 2
   1.2 ປະຫວັດຄວາມເປັນມາ ........ 2
2. ບັນດາປັດໄຈຄວາມສ່ຽງ ........ 9
3. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ ........ 11
   3.1 ນະໂຍບາຍການບໍລິຫານຄວາມສ່ຽງ (Risk Management Policy) ........ 11
   3.2 ລະດັບຄວາມສ່ຽງທີ່ຍອມຮັບໄດ້ (Risk Appetite) ........ 11
   3.3 ໂຄງສ້າງການບໍລິຫານຄວາມສ່ຽງ (Risk Management Struture) ........ 11
   3.4 ຂະບວນການໃນການບໍລິຫານຄວາມສ່ຽງ (Risk Management Process) ........ 11
   3.5 ແຜນບໍລິຫານຄວາມສ່ຽງ ........ 12
4. ການໃຫ້ສິນເຊື່ອ ........ 12
   4.1 ນະໂຍບາຍການໃຫ້ສິນເຊື່ອ ........ 12
   4.2 ຂັ້ນຕອນການອະນຸມັດການເຊົ່າສິນເຊື່ອ ........ 12
      4.2.1 ການພິຈາລະນາຄຸນສົມບັດຂອງຜູ້ຂໍສິນເຊື່ອ (ລູກຄ້າ) ........ 12
      4.2.2 ການອະນຸມັດການໃຫ້ເຊົ່າສິນເຊື່ອ ........ 13
   4.3 ຂັ້ນຕອນການດໍາເນີນງານພາຍຫຼັງການອະນຸມັດການເຊົ່າສິນເຊື່ອ ........ 14
5. ໂຄງສ້າງທຶນຂອງບໍລິສັດ ........ 16
   5.1 ໂຄງສ້າງຜູ້ຖືຮຸ້ນ ........ 16
   5.2 ນະໂຍບາຍການແບ່ງເງິນປັນຜົນ ........ 17
6. ປັດຊະຍາ ແລະ ການດໍາເນີນທຸລະກິດຫຼັກ ........ 18
   6.1 ປັດຊະຍາບໍລິສັດ ........ 18
   6.2 ການດໍາເນີນທຸລະກິດຫຼັກ ........ 19
      6.2.1 ບໍລິການເຊົ່າສິນເຊື່ອລົດຈັກໃໝ່ (ມືໜຶ່ງ) ........ 19

6.2.2 ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ) ........................................................ 20

6.2.3 ບໍລິການເຊົ່າສິນເຊື່ອລົດຈັກຄືນໃໝ່) ............................. ............................... 20

6.2.4 ບໍລິການເຊົ່າສິນເຊື່ອຜ່ອນຄຳ ........................................................................ 20

7. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ ........................................................ 20

7.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ ........................................................................ 20

7.2 ສະພາບໍລິຫານ ........................................................................................ 22

7.2.1 ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ............................................................ 22

7.3 ຄະນະກຳມະການຂອງສະພາບໍລິຫານ ........................................................................ 28

7.3.1 ຄະນະກຳມະການກວດສອບ ........................................................................ 29

7.3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ............................................................ 29

7.3.3 ຄະນະກຳມະການຄັດເລືອກ ........................................................................ 29

7.3.4 ຄະນະກຳມະການກຳນົດຄ່າຕອບແທນ ............................................................ 30

7.3.5 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ................................................ 30

7.4 ຄ່າຕອບແທນຂອງສະມາຊິກສະພາບໍລິຫານ ........................................................................31

8. ຜົນການດຳເນີນທຸລະກິດ ແລະ ຜົນການດຳເນີນງານ ປະຈຳປີ 2022 ...................................... 32

8.1 ຜົນການດຳເນີນການດ້ານການຕະຫຼາດ ........................................................................ 32

8.2 ລາຍຮັບ ........................................................................................ 32

8.3 ລາຍຈ່າຍ ........................................................................................ 33

8.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ ........................................................................ 34

8.5 ພາສີອາກອນ ........................................................................................ 34

9. ຖານະການເງິນຂອງບໍລິສັດ ........................................................................................ 35

9.1 ຊັບສິນ ........................................................................................ 35

9.1.1 ຊັບສິນໝູນວຽນ ........................................................................................ 36

9.1.2 ຊັບສິນບໍ່ໝູນວຽນ ........................................................................................ 36

9.2 ໜີ້ສິນລວມ ........................................................................................ 36

9.2.1 ໜີ້ສິນໝູນວຽນ ........................................................................................ 37

9.2.2 ໜີ້ສິນບໍ່ໝູນວຽນ ........................................................................................ 37

10. ຜົນການດຳເນີນງານດ້ານການຕະຫຼາດ..................................................................................... 38

11. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ..................................................... 38

11.1 ດ້ານການຕະຫຼາດ ............................................................................................ 38

11.2 ເງິນກູ້ຢືມ ແລະ ການຈ່າຍເງິນກູ້................................................................................ 39

11.3 ການລົງທຶນ ............................................................................................................ 39

11.4 ພະນັກງານ.............................................................................................................. 39

# 1. ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ

## 1.1 ຂໍ້ມູນທົ່ວໄປຂອງບໍລິສັດ

| | |
|---|---|
| ຜູ້ສະເໜີອອກຈຳໜ່າຍ | ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ |
| ປະເພດທຸລະກິດ | ໃຫ້ບໍລິການເຊົ່າສິນເຊື່ອ |
| ສັນຍາລັກ | ມທທຊ |
| ສຳນັກງານໃຫຍ່ | ເຮືອນເລກທີ 628, (ໜ່ວຍ5) ຖະໜົນໄກສອນພົມວິຫານ,ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ |
| ໃບອະນຸຍາດລົງທຶນຕ່າງປະເທດ | ໃບອະນຸຍາດລົງທຶນຕ່າງປະເທດ, ເລກທີ:196-11/ຜທ/ລທ3, ລົງວັນທີ: 10 ສິງຫາ 2011 |
| ໃບທະບຽນວິສາຫະກິດ | 0789/ຈທວ, ລົງວັນທີ 22 ມີນາ 2023 |
| ເລກປະຈຳຕົວຜູ້ເສຍອາກອນ | 725714405-9-00 |
| ທຶນຈົດທະບຽນ | 40.000.000.000 ກີບ |
| ຈຳນວນຮຸ້ນທັງໝົດ | 400.000.000 ຮຸ້ນ |
| ອີເມວ | info@mahathuen.com |
| ເວັບໄຊ | www.mahathuen.com |
| ໂທລະສັບ | (856) 21 418065 |
| ໂທລະສານ | (856) 21 418066 |

### 1.2 ປະຫວັດຄວາມເປັນມາ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ: "**ບໍລິສັດ**") ໄດ້ສ້າງຕັ້ງຂຶ້ນໃນວັນທີ 02 ກັນຍາ 2011 ໃນຮູບແບບ ບໍລິສັດຈໍາກັດ ດ້ວຍທຶນຈົດທະບຽນ 300.000 ໂດລາສະຫະລັດ. ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ, ປະເພດທຸລະກິດແມ່ນການໃຫ້ບໍລິການເຊົ່າສິນເຊື່ອ (ສັງຫາລິມາຊັບ), ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈໍາກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12 ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ. ຜູ້ຖືຮຸ້ນຝ່າຍລາວແມ່ນ ທ່ານ ນາງ ອິນທະວີໄລ ອຸດົມ ແລະ ຜູ້ຖືຮຸ້ນຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ, ທັງສອງ ທ່ານ ມີປະສົບການໃນການເຮັດທຸລະກິດໃນ ສປປ ລາວ ມາຫຼາຍກວ່າ 20 ປີ.

ທຸລະກິດເຊົ່າສິນເຊື່ອ (Leasing) ໃນ ສປປ ລາວ ເປັນທຸລະກິດທີ່ຕ້ອງໄດ້ຮັບອະນຸຍາດໃນການດໍາເນີນທຸລະກິດ ຈາກທະນາຄານແຫ່ງ ສປປ ລາວ ໂດຍປະຈຸບັນບໍລິສັດເຊົ່າສິນເຊື່ອຢູ່ໃນການຄຸ້ມຄອງຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

ບໍລິສັດ ເຄື່ອນໄຫວ ແລະ ດໍາເນີນທຸລະກິດທີ່ກ່ຽວກັບ ບໍລິການເຊົ່າສິນເຊື່ອ (ສັງຫາລິມະຊັບ). ບໍລິສັດດໍາເນີນທຸລະກິດດ້ານເຊົ່າສິນເຊື່ອລາຍຍ່ອຍ (Retail finance) ໃນ ສປປ ລາວ ໂດຍໃນເບື້ອງຕົ້ນຈະໄດ້ດໍາເນີນທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ມາຈາກປະເທດຍີ່ປຸ່ນຄື: ຍີ່ຫໍ້ ຮອນດ້າ (HONDA), ຊູຊູກິ (SUZUKI), ຢາມາຮາ (YAMAHA) ແລະ ອື່ນໆ ເປັນທຸລະກິດຫຼັກກ່ອນ ເພື່ອເປັນການສ້າງຖານທຸລະກິດ, ສຶກສາຮຽນຮູ້, ສະສົມປະສົບການໃຫ້ກັບອົງກອນ ລວມທັງການສ້າງບຸກຄະລາກອນ, ລະບົບການເຮັດວຽກທີ່ ເໝາະສົມ ແລະ ຮັດກຸມ ຕະຫຼອດຈົນເຖິງການຮຽນຮູ້ພຶດຕິກໍາ ແລະ ການດໍາເນີນທຸລະກິດໃນ ສປປ ລາວ ຈາກນັ້ນຈະຂະຫຍາຍການລົງທຶນໃນທຸລະກິດສິນເຊື່ອລາຍຍ່ອຍປະເພດອື່ນໆຕໍ່ໄປ.

ນະໂຍບາຍການດໍາເນີນທຸລະກິດໃນຊ່ວງທໍາອິດທີ່ເປີດດໍາເນີນທຸລະກິດ ຕາມແຜນໄລຍະສັ້ນ 3 ປີ ຈະເນັ້ນການສ້າງອົງກອນ ແລະ ບຸກຄະລາກອນເປັນສໍາຄັນ. ນະໂຍບາຍການເຮັດທຸລະກິດຈຶ່ງອອກແນວອະນຸລັກນິຍົມ (Conservative) ໃນດ້ານການຕະຫຼາດ ແລະ ການພິຈາລະນາການໃຫ້ເຊົ່າສິນເຊື່ອ ມີແຜນການປະຕິບັດງານທີ່ຊັດເຈນ, ມີການຄາດຄະເນທາງການເງິນເພື່ອອະນຸມັດໃຫ້ບໍລິການດ້ານການເຊົ່າສິນເຊື່ອຂະໜາດນ້ອຍ ໃຊ້ເງິນລົງທຶນທີ່ບໍ່ສູງຫຼາຍ, ແຕ່ຈະກໍານົດຮູບແບບການປະຕິບັດວຽກງານແບບມືອາຊີບ ຈຶ່ງກໍານົດໃຫ້ມີການສ້າງລະບຽບພາຍໃນ ໃນການປະຕິບັດ ຕະຫຼອດຈົນຂໍ້ກໍານົດຕ່າງໆ ໃນການພິຈາລະນາການໃຫ້ເຊົ່າສິນເຊື່ອທີ່ຊັດເຈນ ແຕ່ສາມາດຢືດຢຸ່ນໄດ້ຕາມຄວາມເໝາະສົມກັບສະພາບການ ແລະ ການແຂ່ງຂັນຂອງທຸລະກິດ.

ໄລຍະປີ 2014 - 2016 ບໍລິສັດ ໄດ້ເນັ້ນການຂະຫຍາຍຂະໜາດຂອງຖານລູກຄ້າ ແລະ ສ້າງຄວາມເປັນຜູ້ນໍາຕະຫຼາດ, ເພີ່ມອັດຕາສ່ວນຄອງຕະຫຼາດໃຫ້ໄດ້ຫຼາຍຂຶ້ນ ເພື່ອຂະຫຍາຍສາຂາ ແລະ ໜ່ວຍບໍລິການໃນນະຄອນຫຼວງວຽງຈັນໃຫ້ຫຼາຍຂຶ້ນໃນອານາຄົດ. ນອກຈາກນີ້ ບໍລິສັດ ມີແຜນໃຫ້ມີການເພີ່ມຜະລິດຕະພັນໃຫ້ຫຼາຍຂຶ້ນເຊັ່ນ: ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (Used motorcycle) ລວມເຖິງ ການໃຫ້ບໍລິການດ້ານການໃຫ້ສິນເຊື່ອຄືນໃໝ່ (Refinance) ຈາກຖານລູກຄ້າເກົ່າທີ່ມີປະຫວັດການຊໍາລະເງິນທີ່ດີ ເພື່ອເປັນການສ້າງຖານລູກຄ້າ ເພື່ອໄປຂະຫຍາຍຜະລິດຕະພັນປະເພດອື່ນໆ.

ນັບແຕ່ປີ 2017 ເປັນຕົ້ນໄປ ບໍລິສັດ ມີແຜນຈະຂະຫຍາຍສາຂາ ແລະ ໜ່ວຍບໍລິການໄປຕ່າງແຂວງ ແລະ ຂະຫຍາຍທຸລະກິດເຊົ່າສິນເຊື່ອປະເພດອື່ນໆ, ໂດຍມີແຜນການລະດົມທຶນໃນຕະຫຼາດຫຼັກຊັບລາວ (Lao Securities Exchange ຫຼື LSX), ຊຶ່ງຈະຕ້ອງມີການກໍານົດຍຸດທະສາດໃນການດໍາເນີນທຸລະກິດໃນທາງບຸກ (Aggressive) ໃຫ້ຫຼາຍຂຶ້ນ, ໂດຍຈະຕ້ອງກໍານົດວິທີການຄວບຄຸມພາຍໃນທີ່ຮັດກຸມ ລວມເຖິງການບໍລິຫານຄວາມສ່ຽງທີ່ເໝາະສົມກັບຕະຫຼາດ ສ້າງອົງກອນໃຫ້ມີການບໍລິຫານຈັດການທີ່ດີ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່

ທຸລະກິດ ໂດຍຈະຕ້ອງສ້າງຄວາມສົມດຸນລະຫວ່າງລູກຄ້າ, ຄູ່ຄ້າ, ນັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ, ເນື່ອງຈາກ ບໍລິສັດ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ບໍລິສັດໄດ້ຫັນປ່ຽນຮູບແບບເປັນ ບໍລິສັດ ມະຫາຊົນ ໃນວັນທີ 20 ພະຈິກ 2017 ໂດຍມີທຶນຈົດທະບຽນ 27.760.000.000 ກີບ ຊຶ່ງດໍາເນີນທຸລະກິດການໃຫ້ບໍລິການ ເຊົ່າສິນເຊື່ອ (ສັງຫາລິມາຊັບ) ພາຍໃຕ້ກົດໝາຍຂອງ ສປປ ລາວ (ຊຶ່ງຕໍ່ໄປນີ້ ເອີ້ນວ່າ "ວັນທີປ່ຽນຮູບແບບບໍລິສັດ") ໂດຍມີຜູ້ຖືຮຸ້ນຈາກບໍລິສັດ ມະຫາທຸນ ໂຮນດິ້ງ ຈໍາກັດ ຈໍານວນ 97,5792507204611 ສ່ວນຮ້ອຍ ຊຶ່ງເປັນບໍລິສັດຈາກປະເທດໄທ, ທ່ານ ນາງ ອິນທະວິໄລ ອຸດົມ ຖືຮຸ້ນຈໍານວນ 2,4204322766571 ສ່ວນຮ້ອຍ ແລະ ຜູ້ຖືຮຸ້ນລາຍຍ່ອຍ 11 ທ່ານ ແມ່ນຖືຮຸ້ນຈໍານວນ 0,0003170028818 ສ່ວນຮ້ອຍ.

ນັບຕັ້ງແຕ່ບໍລິສັດສ້າງຕັ້ງຂຶ້ນ ຈົນມາເຖິງກ່ອນການອອກຈໍາໜ່າຍຮຸ້ນ (IPO) ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ 6 ຄັ້ງ. ໃນມື້ສ້າງຕັ້ງບໍລິສັດມີທຶນຈົດທະບຽນ 300.000 ໂດລາສະຫະລັດ ຕໍ່ມາໃນປີ 2012 ໄດ້ເພີ່ມທຶນ ແລະ ປ່ຽນທຶນຈົດທະບຽນມາເປັນສະກຸນເງິນກີບ 5,6 ຕື້ກີບ. ໃນປີ 2014 ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງ ຄື: 12,8 ຕື້ກີບ ແລະ 17,76 ຕື້ກີບ ຕາມລໍາດັບ. ໃນປີ 2015 ແມ່ນເພີ່ມທຶນຈົດທະບຽນມາເປັນ 23,36 ຕື້ກີບ ແລະ ໃນປີ 2016 ກໍ່ໄດ້ມີການເພີ່ມທຶນຈົດທະບຽນ 2 ຄັ້ງຄື: 25,6 ຕື້ກີບ ແລະ 27,76 ຕື້ກີບ ຕາມລໍາດັບ.

ປີ 2018 ບໍລິສັດ ໄດ້ຈັດຕັ້ງສາຂາແຫ່ງທໍາອິດຂຶ້ນທີ່ ແຂວງ ສະຫວັນນະເຂດ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສໍາລັບລູກຄ້າ ໂດຍໃນໄລຍະທໍາອິດຈະໃຫ້ບໍລິການເຊົ່າສິນເຊື່ອສໍາລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ການບໍລິການຜະລິດຕະພັນອື່ນໆຕໍ່ໄປ ສາຂາສະຫວັນນະເຂດຕັ້ງຢູ່ ເຮືອນເລກທີ 013 ໜ່ວຍ 1 ບ້ານ ລັດຕະນະລັງສີໄຕ້ ເມືອງ ໄກສອນພົມວິຫານ ແຂວງ ສະຫວັນນະເຂດ

ໃນປີນີ້ ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈໍານວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈໍາໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກຄະນະກໍາມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມິຖຸນາ 2018 ພາຍຫຼັງຈາກການຈໍາໜ່າຍຮຸ້ນເພີ່ມທຶນແລ້ວເຮັດໃຫ້ບໍລິສັດມີຮຸ້ນຈໍານວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງ ໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລໍາດັບທີ 8 ຂອງຕະຫຼາດຫຼັກຊັບລາວ.

ປີ 2019 ບໍລິສັດ ໄດ້ຈັດຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍຄື ໜ່ວຍບໍລິການ ດົງເຫັນ ມີທີ່ຕັ້ງຢູ່ ເຮືອນເລກທີ 254/259 ບ້ານດົງເຫັນ ຖະໜົນເສັ້ນທາງເລກທີ 9 ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

ໃນເດືອນ ມິຖຸນາ ປີດຽວກັນນີ້ ບໍລິສັດໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອສໍາລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການໃຫ້ບໍລິການເຊົ່າສິນເຊື່ອໃຫ້ຄວບຄຸມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ

ປີ 2020 ບໍລິສັດ ໄດ້ເພີ່ມຜະລິດຕະພັນໃຫມ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃຫມ່ (Refinance) ສໍາລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສໍາລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ

ເມື່ອວັນທີ 4 ທັນວາ 2020 ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ໄດ້ມີມະຕິເຫັນດີດ້ວຍມະຕິສະເພາະ ດັ່ງນີ້:

1. ແກ້ໄຂສັດສ່ວນຫຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ເປັນສັດສ່ວນສູງສຸດຕາມທີ່ຕະຫຼາດຫຼັກຊັບລາວ ຫຼື ສໍານັກງານຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງກໍານົດໄວ້ ໂດຍມອບອໍານາດໃຫ້ຝ່າຍບໍລິຫານເປັນຜູ້ດໍາເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດໍາເນີນການແລ້ວສໍາເລັດ

2. ປ່ຽນແປງມູນຄ່າກຳນົດ (Par Value) ຈາກ 1.000 ກີບ ເປັນ 100 ກີບ ແລະ ເພີ່ມຈຳນວນຮຸ້ນ ຈາກ 40.000.000 ຮຸ້ນ ເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ໂດຍມອບອຳນາດໃຫ້ຝ່າຍບໍລິຫານເປັນຜູ້ດຳເນີນການໃນດ້ານເອກະສານຕ່າງໆ ຈົນກວ່າຈະດຳເນີນການແລ້ວສຳເລັດ

ປີ 2021, ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມິຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າກັບ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ.

ເມື່ອວັນທີ 13 ສິງຫາ 2021 ສະພາບໍລິຫານໄດ້ອະນຸມັດບໍລິສັດ ຂະຫຍາຍພື້ນທີ່ບໍລິການເພີ່ມເຕີມທີ່ ແຂວງ ຄຳມ່ວນ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ສາຂາ ຄຳມ່ວນ ຕັ້ງຢູ່ ເຮືອນເລກທີ 190, ໜ່ວຍ 13, ບ້ານ ວຽງວິໄລ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ

ເມື່ອວັນທີ 25 ຕຸລາ 2021 ບໍລິສັດໄດ້ມີການເປີດໂຕ Mobile application M HUK ເຊິ່ງເປັນແອັບທີ່ອຳນວຍຄວາມສະດວກໃນການຮຽກເບິ່ງຂໍ້ມູນບັນຊີສິນເຊື່ອຂອງລູກຄ້າ ແລະ ຍັງເປັນຊ່ອງທາງໃນການນຳສະເໜີຜະລິດຕະພັນຕ່າງໆຂອງບໍລິສັດຜ່ານທາງສະມາດໂຟນລວມເຖິງການຕິດຕໍ່ສື່ສານລະຫວ່າງລູກຄ້າກັບບໍລິສັດໃຫ້ມີຄວາມວ່ອງໄວຍິ່ງຂຶ້ນ

ໃນປີ 2022 ບໍລິສັດ ໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອ "ຜ່ອນຄຳ" ໂດຍເລີ່ມ ດຳເນີນການຮ່ວມກັບ ຮ້ານ ຄຳພູວົງ ເຊິ່ງເປັນຮ້ານຄຳທີ່ໃຫຍ່ທີ່ສຸດໃນ ສປປ ລາວ ເມື່ອ ເດືອນ ພະຈິກ 2022.

ໃນປີ 2023 ບໍລິສັດ ໄດ້ຂະຫຍາຍການໃຫ້ບໍລິການການເຊົ່າສິນເຊື່ອ "ຜ່ອນຄຳ" ໄປໃນພື້ນທີ່ຕ່າງແຂວງໄດ້ແກ່ ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງຈຳປາສັກ ເພື່ອຂະຫຍາຍການໃຫ້ບໍລິການໃຫ້ຮອງຮັບກັບຄວາມຕ້ອງການຂອງຜູ້ໃຊ້ບໍລິການ ແລະ ເປັນການຂະຫຍາຍສິນເຊື່ອຜ່ອນຄຳໃຫ້ຫລາຍຍິ່ງຂຶ້ນ.

ປະຫວັດຄວາມເປັນມາຂອງບໍລິສັດແຕ່ລະໄລຍະ

| ປີ | ເຫດການທີ່ເກີດຂຶ້ນແຕ່ລະໄລຍະ |
|---|---|
| 2011 | ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ສ້າງຕັ້ງຂຶ້ນເມື່ອວັນທີ 2 ກັນຍາ 2011 ດ້ວຍທຶນຈົດທະບຽນ 300,000 ໂດລາສະຫະລັດ, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດເລກທີ 3151/ຫຈທ ລົງວັນທີ 02 ກັນຍາ 2011, ຊຶ່ງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຖືຮຸ້ນໂດຍນັກທຸລະກິດຄົນລາວ 12 ສ່ວນຮ້ອຍ ແລະ ນັກທຸລະກິດຄົນໄທ 88 ສ່ວນຮ້ອຍ, ຜູ້ຖືຮຸ້ນຝ່າຍລາວແມ່ນ: ທ່ານ ນາງ ອິນທະວິໄລ ອຸດົມ ແລະ ຜູ້ຖືຮຸ້ນຝ່າຍໄທແມ່ນ ທ່ານ ຊາຄຣິດ ນັກສອນ. |
| 2012 | ໃນປີ 2012 ບໍລິສັດໄດ້ມີການປ່ຽນແປງສະກຸນເງິນຈົດທະບຽນ ຈາກໂດລາສະຫະລັດ ເປັນກີບ ແລະ ເພີ່ມທຶນຈົດທະບຽນ ຈາກ 300,000 ໂດລາສະຫະລັດ ມາເປັນ 5.600.000.000 ກີບ ຫຼື ປະມານ 700.000 ໂດລາສະຫະລັດ ແລະ ລົບລ້າງໃບທະບຽນວິສາຫະກິດເລກທີ 3151/ຫຈທ, ລົງວັນທີ 02 ກັນຍາ 2011 ເນື່ອງ<br>ຈາກມີການເພີ່ມທຶນຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ ມາເປັນ ເລກທີ 1346/ຈທວ ລົງວັນທີ 09 ຕຸລາ 2012. |

**2014**

ໃນປີ 2014 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 3 ຄັ້ງຄື:

ຄັ້ງທີ 1 ຈາກເລກທະບຽນວິສາຫະກິດເກົ່າ ເລກທີ 1346/ຈທວ ລົງວັນທີ 09 ຕຸລາ 2012 ໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນ ເລກທີ 007/ຈທວ ລົງວັນທີ 06 ມັງກອນ 2014 ໂດຍມີລາຍລະອຽດດັ່ງນີ້: ທ່ານ ຊາຄຣິດ ນັກສອນ ໂອນຮຸ້ນຈຳນວນ 616.000 ຮຸ້ນ ເທົ່າກັບ 4.928.000.000 ກີບ, ມີມູນຄ່າຮຸ້ນລະ 8.000 ກີບ ໃຫ້ແກ່ ບໍລິສັດ ມະຫາທຸນ ໂຮນດິ້ງ ຈຳກັດ (Mahathun Holding Co., Ltd).

ຕໍ່ມາຄັ້ງທີ 2 ບໍລິສັດ ໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນຄື:
ເພີ່ມທຶນຈົດທະບຽນ ຂອງບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 7.200.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 5.600.000.000ກີບ ເພີ່ມຂຶ້ນມາເປັນ 12.800.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫາທຸນ ໂຮນດິ້ງ ຈຳກັດ | 616.000 ຮຸ້ນ | 88,00% | 1.516.000 ຮຸ້ນ | 94,75% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 12,00% | 84.000 ຮຸ້ນ | 5,25% |
| ລວມ | 700.000 ຮຸ້ນ | 100% | 1.600.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບຕໍ່ຮຸ້ນ
ດັ່ງນັ້ນ, ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນ 210/ຈທວ ລົງວັນທີ 27 ພຶດສະພາ 2014.
ຄັ້ງທີ 3 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນ ເພີ່ມທຶນຈົດທະບຽນຂອງບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 4.960.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 12.800.000.000 ກີບ ເພີ່ມຂຶ້ນເປັນ 17.760.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫາທຸນ ໂຮນດິ້ງ ຈຳກັດ | 1.516.000 ຮຸ້ນ | 94,75% | 2.136.000 ຮຸ້ນ | 96,22% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 5,25% | 84.000 ຮຸ້ນ | 3,78% |
| ລວມ | 1.600.000 ຮຸ້ນ | 100,00% | 2.220.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ
ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 435/ຈທວ ລົງວັນທີ 27 ຕຸລາ 2014

**2015**

ໃນປີ 2015 ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຜູ້ຖືຮຸ້ນ
ເພີ່ມທຶນຈົດທະບຽນ ຂອງບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 5.600.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 17.760.000.000 ກີບ ເພີ່ມຂຶ້ນເປັນ 23.360.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫາທຸນ ໂຮນດິ້ງ ຈຳກັດ | 2.136.000 ຮຸ້ນ | 96,22% | 2.836.000 ຮຸ້ນ | 97,12% |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 3,78% | 84.000 ຮຸ້ນ | 2,88% |
| ລວມ | 2.220.000 ຮຸ້ນ | 100% | 2.920.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

| | |
|---|---|
| | ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 649/ຈທວ ລົງວັນທີ 17 ກັນຍາ 2015 |

**2016**

ໃນປີ 2016 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 3 ຄັ້ງຄື:

ຄັ້ງທີ 1 ເນື່ອງຈາກມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຮຸ້ນຂອງຜູ້ຖືຮຸ້ນ ເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 2.240.000.000 ກີບ, ໂດຍມີການເພີ່ມທຶນຈົດທະບຽນຈາກ 23.360.000.000 ກີບ ເພີ່ມຂຶ້ນເປັນ 25.600.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ດັ່ງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 2.836.000 ຮຸ້ນ | 97,12% | 3.116.000 ຮຸ້ນ | 97,38% |
| ທ່ານ ນາງ ອິນທະວີໄລ ອຸດົມ | 84.000 ຮຸ້ນ | 2,88% | 84.000 ຮຸ້ນ | 2,62% |
| ລວມ | 2.920.000 ຮຸ້ນ | 100% | 3.200.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 067/ຈທວ ລົງວັນທີ 28 ມັງກອນ 2016.

ຄັ້ງທີ 2 ເນື່ອງຈາກມີການເພີ່ມທຶນຈົດທະບຽນ, ເພີ່ມຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນຮຸ້ນຂອງຜູ້ຖືຮຸ້ນເພີ່ມທຶນຈົດທະບຽນ ຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 2.160.000.000 ກີບ ໂດຍມີການເພີ່ມທຶນຈົດທະບຽນຈາກ 25.600.000.000 ກີບ ເພີ່ມຂຶ້ນເປັນ 27.760.000.000 ກີບ ຊຶ່ງມີໂຄງສ້າງຜູ້ຖືຮຸ້ນໃໝ່ດັ່ງລຸ່ມນີ້

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 3.116.000 ຮຸ້ນ | 97,38% | 3.386.000 ຮຸ້ນ | 97,58% |
| ທ່ານ ນາງ ອິນທະວີໄລ ອຸດົມ | 84.000 ຮຸ້ນ | 2,62% | 84.000 ຮຸ້ນ | 2,42% |
| ລວມ | 3.200.000 ຮຸ້ນ | 100% | 3.470.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ດັ່ງນັ້ນ ຈຶ່ງໄດ້ມີການປ່ຽນແປງໃບທະບຽນວິສາຫະກິດໃໝ່ມາເປັນເລກທີ 480/ຈທວ ລົງວັນທີ 15 ມິຖຸນາ 2016 .

ຄັ້ງທີ 3 ເນື່ອງຈາກມີການປ່ຽນແປງຜູ້ອຳນວຍການ, ເພີ່ມຜູ້ອຳນວຍການ ແລະ ເພີ່ມສະມາຊິກສະພາບໍລິຫານໂດຍອີງຕາມບົດລາຍງານ ສະພາບໍລິຫານຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ຄັ້ງວັນທີ 17 ມີນາ 2016. ໂດຍມີຜູ້ເຂົ້າຮ່ວມກອງປະຊຸມ ສະພາບໍລິຫານ 7 ທ່ານ ທີ່ຖືກແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນມີ ດັ່ງນີ້:

- ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ
- ທ່ານ ນາງ ອິນທະວີໄລ ອຸດົມ ຮອງປະທານສະພາບໍລິຫານ
- ທ່ານ ມານົບ ຕຣີລິດວິໄລ ຜູ້ອຳນວຍການໃຫຍ່
- ທ່ານ ຊັດພົນໄຊ ປັນຍາທຳບະດີ ຜູ້ອຳນວຍການ
- ທ່ານ ທອງຖະຫວັນ ທອງແຖມ ຜູ້ອຳນວຍການ
- ທ່ານ ກຣຽງໄກ ນິດສະຍັນ ຜູ້ອຳນວຍການ
- ທ່ານ ນາງ ປຣາດຖະໜາ ນັກສອນ ຜູ້ອຳນວຍການ

ດັ່ງນັ້ນ, ຈຶ່ງໄດ້ມີການປ່ຽນແປງເລກທະບຽນວິສາຫະກິດໃໝ່ມາເປັນ 578/ຈທວ ລົງວັນທີ 13 ກໍລະກົດ 2016

2017

ໃນປີ 2017 ບໍລິສັດໄດ້ມີການປ່ຽນແປງທະບຽນວິສາຫະກິດ 1 ຄັ້ງຄື:

ອີງຕາມມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ວັນທີ 25 ກໍລະກົດ 2017 ໃນກອງປະຊຸມ ທ່ານ ນາງ ອິນທະວິໄລ ອຸດົມ ມີຈຸດປະສົງຈະໂອນຂາຍຮຸ້ນ ຈຳນວນ 11 ຮຸ້ນ ມູນຄ່າລວມເປັນ 88.000 ກີບ ເທົ່າກັບເປີເຊັນ 0,00031702 ສ່ວນຮ້ອຍຂອງຮຸ້ນທັງໝົດ ໃຫ້ແກ່ບຸກຄົນພາຍນອກ ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງການເພີ່ມທຶນ | ອັດຕາສ່ວນ (ໃໝ່) |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 3.386.000 ຮຸ້ນ | 97,58% | 3.386.000 ຮຸ້ນ | 97,5792507204611 % |
| ທ່ານ ນາງ ອິນທະວິໄລ ອຸດົມ | 84.000 ຮຸ້ນ | 2,62% | 83.989 ຮຸ້ນ | 2,4204322766571% |
| ທ່ານ ນາງ ທະນົງລັກ ອຸດົມ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ທະນົງສັກ ອຸດົມ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ສັງຄົມ ຈັນສຸກ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ຊາຄຣິດ ນັກສອນ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ນາງ ປຣາດຖະໜາ ນັກສອນ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ນາງ ຈິດຕິມາ ນັກສອນ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ນາງ ສຸທິດາ ນັກສອນ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ກຣຽງໄກ ນິດສະຍັນ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ມານົບ ຕຣີລິດວິໄລ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ທອງຖະຫວັນ ທອງແຖມ | - | - | 1 ຮຸ້ນ | 0,0000288184438% |
| ທ່ານ ຊັດພົນໄຊ ປັນຍາທຳບະດີ | - | - | 1 ຮຸ້ນ | 0,0000288184438% |
| ລວມ | 3.470.000ຮຸ້ນ | 100% | 3.470.000 ຮຸ້ນ | 100% |

ມູນຄ່າກຳນົດເທົ່າກັບ 8.000 ກີບ ຕໍ່ຮຸ້ນ

ມາຮອດວັນທີ 10 ສິງຫາ 2017 ບໍລິສັດໄດ້ມີການຈັດກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 02 ປີ 2017 ເພື່ອພິຈາລະນາ ແລະ ອະນຸມັດການປ່ຽນແປງມູນຄ່າກຳນົດຮຸ້ນຈາກເດີມ 8.000 ກີບ ເປັນ 1.000 ກີບ ແລະ ປ່ຽນແປງຮູບແບບຈາກບໍລິສັດຈຳກັດມາເປັນບໍລິສັດມະຫາຊົນ ເພື່ອກະກຽມອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນເປັນຄັ້ງທຳອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ຊື່ຜູ້ຖືຮຸ້ນ | ຈຳນວນຮຸ້ນກ່ອນ ການເພີ່ມທຶນ | ອັດຕາສ່ວນ | ຈຳນວນຮຸ້ນຫຼັງ ການເພີ່ມທຶນ | ອັດຕາສ່ວນ |
|---|---|---|---|---|
| ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ | 3.386.000 ຮຸ້ນ | 97,5792507204611 % | 27.088.000 ຮຸ້ນ | 97,5792507204611% |
| ທ່ານ ນາງ ອິນທະວິໄລ ອຸດົມ | 83.989 ຮຸ້ນ | 2,4204322766571 % | 671.912 ຮຸ້ນ | 2,4204322766571% |
| ທ່ານ ນາງ ທະນົງລັກ ອຸດົມ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ທະນົງສັກ ອຸດົມ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ສັງຄົມ ຈັນສຸກ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ຊາຄຣິດ ນັກສອນ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ນາງ ປຣາດຖະໜາ ນັກສອນ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ນາງ ຈິດຕິມາ ນັກສອນ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ນາງ ສຸທິດາ ນັກສອນ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ກຣຽງໄກ ນິດສະຍັນ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ມານົບ ຕຣີລິດວິໄລ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ທອງຖະຫວັນ ທອງແຖມ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ທ່ານ ຊັດພົນໄຊ ປັນຍາທຳບະດີ | 1 ຮຸ້ນ | 0,0000288184438 % | 8 ຮຸ້ນ | 0,0000288184438% |
| ລວມ | 3.470.000 ຮຸ້ນ | 100% | 27.760.000 ຮຸ້ນ | 100% |

2018

ໃນປີ 2018 ບໍລິສັດໄດ້ອອກຮຸ້ນເພີ່ມທຶນໃໝ່ ຈຳນວນ 12.240.000 ຮຸ້ນ ລາຄາຕາມມູນຄ່າ 1.000 ກີບຕໍ່ຮຸ້ນ ເພື່ອຈຳໜ່າຍໃຫ້ກັບປະຊາຊົນທົ່ວໄປ (Initial Public Officering) ໂດຍໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອວັນທີ 13 ມິຖຸນາ 2018 ພາຍຫຼັງຈາກການຈຳໜ່າຍຮຸ້ນເພີ່ມທຶນແລ້ວເຮັດໃຫ້ບໍລິສັດມີຮຸ້ນຈຳນວນ 40.000.000 ຮຸ້ນ ຫຼື ມີທຶນຈົດທະບຽນລວມທັງໝົດ 40.000.000.000 ກີບ ຊຶ່ງບໍລິສັດໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ເມື່ອວັນທີ 18 ກັນຍາ 2018 ຖືເປັນບໍລິສັດລຳດັບທີ 8 ຂອງຕະຫຼາດຫຼັກຊັບລາວ.

ບໍລິສັດ ໄດ້ຈັດຕັ້ງສາຂາ ແຫ່ງທຳອິດຂຶ້ນທີ່ແຂວງ ສະຫວັນນະເຂດ ເພື່ອຈະໃຫ້ບໍລິການສິນເຊື່ອສຳລັບລູກຄ້າ ໂດຍໃນໄລຍະທຳອິດຈະໃຫ້ບໍລິການເຊົ່າສິນເຊື່ອ ສຳລັບລົດຈັກກ່ອນ ແລະ ຈະຂະຫຍາຍໃຫ້ບໍລິການຜະລິດຕະພັນອື່ນໆອີກຕໍ່ໄປ

| | |
|---|---|
| 2019 | ປີ 2019 ບໍລິສັດ ໄດ້ສ້າງຕັ້ງໜ່ວຍບໍລິການລູກຄ້າຂຶ້ນ 1 ແຫ່ງໃນແຂວງ ສະຫວັນນະເຂດ ກໍຄືໜ່ວຍບໍລິການ ດົງເຫັນ ໃນເດືອນ ມິຖຸນາ ປີດຽວກັນນີ້ ໄດ້ເລີ່ມໃຫ້ການບໍລິການເຊົ່າສິນເຊື່ອ ສໍາລັບອຸປະກອນທາງການກະເສດ ເຊິ່ງເລີ່ມຕົ້ນຈາກລົດໄຖນາ ປະເພດເດີນຕາມ ແລະ ເມື່ອມີຄວາມພ້ອມຫຼາຍຂຶ້ນຈະຂະຫຍາຍການໃຫ້ບໍລິການເຊົ່າສິນເຊື່ອໃຫ້ຄອບຄຸມເຄື່ອງມືທາງການກະເສດໃຫ້ມີຄວາມຫຼາກຫຼາຍຂຶ້ນ |
| 2020 | ປີ 2020 ບໍລິສັດ ໄດ້ໄດ້ເພີ່ມຜະລິດຕະພັນໃໝ່ ໂດຍເລີ່ມໃຫ້ບໍລິການເຊົ່າສິນເຊື່ອຄືນໃໝ່ (Refinance) ສໍາລັບລົດທີ່ໃຊ້ແລ້ວ (Used car) ເພື່ອເພີ່ມຄວາມຫຼາກຫຼາຍຂອງຜະລິດຕະພັນ ສໍາລັບເປັນທາງເລືອກໃຫ້ກັບລູກຄ້າຂອງບໍລິສັດ |
| 2021 | ບໍລິສັດໄດ້ສໍາເລັດການແຕກຮຸ້ນເມື່ອວັນທີ 24 ມິຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າກັບ 100 ກີບຕໍ່ຮຸ້ນ ແລະ ຈໍານວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ.<br>ເມື່ອວັນທີ 13 ສິງຫາ 2021 ສະພາບໍລິຫານໄດ້ອະນຸມັດບໍລິສັດ ຂະຫຍາຍພື້ນທີ່ບໍລິການເພີ່ມເຕີມທີ່ ແຂວງ ຄໍາມ່ວນ ເພື່ອທີ່ຈະໃຫ້ບໍລິການສິນເຊື່ອສໍາລັບລູກຄ້າ ສາຂາ ຄໍາມ່ວນ ຕັ້ງຢູ່ ເຮືອນເລກທີ 190, ໜ່ວຍ 13, ບ້ານ ວຽງວິໄລ, ເມືອງ ທ່າແຂກ, ແຂວງ ຄໍາມ່ວນ<br>ເມື່ອວັນທີ 25 ຕຸລາ 2021 ບໍລິສັດໄດ້ມີການເປີດໂຕ Mobile application M HUK ເຊິ່ງເປັນແອັບທີ່ອໍານວຍຄວາມສະດວກໃນການຮຽກເບິ່ງຂໍ້ມູນບັນຊີສິນເຊື່ອຂອງລູກຄ້າ ແລະ ຍັງເປັນຊ່ອງທາງໃນການນໍາສະເໜີຜະລິດຕະພັນຕ່າງໆຂອງບໍລິສັດຜ່ານທາງສະມາດໂຟນລວມເຖິງການຕິດຕໍ່ສື່ສານລະຫວ່າງລູກຄ້າກັບບໍລິສັດໃຫ້ມີຄວາມວ່ອງໄວຍິ່ງຂຶ້ນ |
| 2022 | ໃນປີ 2022 ບໍລິສັດ ໄດ້ເລີ່ມໃຫ້ບໍລິການເຊົ່າສິນເຊື່ອ "ຜ່ອນຄໍາ" ໂດຍເລີ່ມດໍາເນີນການຮ່ວມກັບ ຮ້ານ ຄໍາພູວົງ ເຊິ່ງເປັນຮ້ານຄໍາທີ່ໃຫຍ່ທີ່ສຸດໃນ ສປປ ລາວ ເມື່ອເດືອນ ພະຈິກ 2022. |
| 2023 | ໃນປີ 2023 ບໍລິສັດ ໄດ້ຂະຫຍາຍການໃຫ້ບໍລິການການເຊົ່າສິນເຊື່ອ "ຜ່ອນຄໍາ" ໄປໃນພື້ນທີ່ຕ່າງແຂວງ ໄດ້ແກ່ ແຂວງ ສະຫວັນນະເຂດ, ແຂວງຄໍາມ່ວນ ແລະ ແຂວງຈໍາປາສັກ ເພື່ອຂະຫຍາຍການໃຫ້ບໍລິການໃຫ້ຮອງຮັບກັບຄວາມຕ້ອງການຂອງຜູ້ໃຊ້ບໍລິການ ແລະ ເປັນການຂະຫຍາຍສິນເຊື່ອຜ່ອນຄໍາໃຫ້ຫລາຍຍິ່ງຂຶ້ນ. |

## 2. ບັນດາປັດໄຈຄວາມສ່ຽງ

ການລົງທຶນໃນທຸລະກິດໃດໜຶ່ງອາດຈະກ່ຽວຂ້ອງກັບຄວາມສ່ຽງໄດ້. ກ່ອນຈະຕັດສິນໃຈລົງທຶນ ໂດຍພິຈາລະນາຄວາມສ່ຽງທີ່ໄດ້ອະທິບາຍຢູ່ຂ້າງລຸ່ມນີ້, ຜູ້ລົງທຶນຈະຕ້ອງໄດ້ພິຈາລະນາຢ່າງຮອບຄອບກ່ຽວກັບ ຂໍ້ມູນຂ່າວສານທັງໝົດໃນບົດລາຍງານ ປະຈໍາປີສະບັບນີ້. ໝວດຕໍ່ໄປນີ້ ອະທິບາຍກ່ຽວກັບຄວາມສ່ຽງຈໍານວນໜຶ່ງທີ່ສາມາດເກີດຂຶ້ນ ແລະ ສາມາດ ມີຜົນກະທົບຕໍ່ບໍລິສັດ ແລະ ຄຸນຄ່າຂອງການລົງທຶນໃນບໍລິສັດ. ເຖິງແມ່ນວ່າ, ບໍລິສັດໄດ້ພະຍາຍາມພິຈາລະນາຄືນບັນຫາ ຄວາມສ່ຽງທີ່ສໍາຄັນທັງໝົດ, ແຕ່ກໍ່ຍັງອາດຈະມີຄວາມສ່ຽງອື່ນໆ ຊຶ່ງບໍລິສັດບໍ່ໄດ້ຄາດຄິດ, ຄວາມສ່ຽງເພີ່ມເຕີມອື່ນໆທີ່ທາງບໍລິສັດບໍ່ອາດຮັບຮູ້ໄດ້ໃນປະຈຸບັນ ແລະ ຄວາມສ່ຽງອື່ນໆທີ່ບໍ່ສໍາຄັນ ຊຶ່ງອາດຈະຍັງມີຜົນກະທົບທາງລົບຕໍ່ການດໍາເນີນທຸລະກິດ, ເງື່ອນໄຂທາງການເງິນ, ຜົນຂອງການດໍາເນີນງານ ແລະ ການຄາດຄະເນຂອງບໍລິສັດ. ບົດລາຍງານ ປະຈໍາປີສະບັບນີ້ຍັງໄດ້ມີການຄາດຄະເນການດໍາເນີນທຸລະກິດໃນຕໍ່ໜ້າທີ່ກ່ຽວຂ້ອງກັບຄວາມສ່ຽງ ແລະ ຄວາມບໍ່ແນ່ນອນອື່ນໆ. ຜົນໄດ້ຮັບຕົວຈິງຂອງບໍລິສັດ ອາດແຕກຕ່າງຢ່າງສິ້ນເຊີງຈາກ

ແຜນ ຍ້ອນຄວາມສ່ຽງເຫຼົ່ານັ້ນ. ຈາກການອະທິບາຍ ການຄາດຄະເນຂອງການດຳເນີນທຸລະກິດໃນຕໍ່ໜ້າອັນເປັນຜົນຈາກບາງປັດໄຈ ລວມທັງບັນດາຄວາມສ່ຽງທີ່ບໍລິສັດພວກເຮົາອາດຈະປະເຊີນໜ້າຕາມທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້ ແລະ ບ່ອນອື່ນໆໃນບົດລາຍງານ ປະຈຳປີສະບັບນີ້.

ສປປ ລາວ ອາດຈະຖືວ່າຍັງເປັນ «ຕະຫຼາດບຸກເບີກ (Frontier Market)» ແລະ ການລົງທຶນໃນຕະຫຼາດຫຼັກຊັບທີ່ສ້າງຕັ້ງຂຶ້ນໃໝ່ ສາມາດເຮັດໃຫ້ເກີດມີຄວາມສ່ຽງ ຊຶ່ງບໍ່ມີຢູ່ໃນ «ຕະຫຼາດເກີດໃໝ່ (Emerging Market)». ດັ່ງນັ້ນ, ນອກຈາກບັນຫາທີ່ພົວພັນກັບບໍລິສັດ (ຄຸນນະພາບຂອງການບໍລິຫານ ແລະ ຊັບສິນ, ການສ້າງກະແສເງິນສົດ, ສະພາບຄ່ອງທາງການເງິນ, ລະບຽບການຕ່າງໆທີ່ກ່ຽວຂ້ອງ ແລະ ອື່ນໆ), ຜູ້ລົງທຶນຍັງຈະຕ້ອງ ໄດ້ເອົາໃຈໃສ່ຢ່າງລະມັດລະວັງ ຕໍ່ບັນຫາທີ່ພົວພັນກັບຕະຫຼາດຫຼັກຊັບໃໝ່ເຊັ່ນ: ລະບຽບການ, ອາກອນ, ສະພາບຄ່ອງ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບທຸລະກຳການຊື້-ຂາຍ.

ນອກຈາກຂໍ້ມູນຂ່າວສານອື່ນໆ ທີ່ມີຢູ່ໃນບົດລາຍງານ ປະຈຳປີສະບັບນີ້ແລ້ວ ຜູ້ລົງທຶນຈະຕ້ອງໄດ້ພິຈາລະນາກ່ຽວກັບບັນດາຄວາມສ່ຽງທີ່ອະທິບາຍຢູ່ຂ້າງລຸ່ມນີ້ກ່ອນທີ່ຈະຕັດສິນໃຈລົງທຶນ. ຕໍ່ໄປນີ້ ແມ່ນການອະທິບາຍຄວາມສ່ຽງທີ່ສຳຄັນຈຳນວນໜຶ່ງທີ່ສາມາດມີຜົນກະທົບຕໍ່ບໍລິສັດ ແລະ ມູນຄ່າຂອງການລົງທຶນໃນບໍລິສັດ. ນອກຈາກນັ້ນ, ກໍ່ອາດຈະມີຄວາມສ່ຽງອື່ນໆອີກ ຊຶ່ງບໍລິສັດອາດຈະຮູ້ ຫຼື ອາດຈະເປັນຄວາມສ່ຽງທີ່ບໍລິສັດຖືວ່າບໍ່ສຳຄັນໃນປະຈຸບັນ ຊຶ່ງອາດມີຜົນກະທົບທາງລົບຄືກັນ ແລະ ຜູ້ລົງທຶນອາດຈະສູນເສຍທຶນຂອງຕົນສ່ວນໜຶ່ງ ຫຼື ທັງໝົດກໍ່ເປັນໄດ້.

ບັນດາປັດໄຈຄວາມສ່ຽງຫຼັກໆ ໃນການລົງທຶນໃນຮຸ້ນສາມັນຂອງບໍລິສັດ ແມ່ນໄດ້ຖືກສັງລວມໄວ້ດັ່ງລຸ່ມນີ້:

a. ຄວາມສ່ຽງໃນການດຳເນີນທຸລະກິດ
   - ຄວາມສ່ຽງເສດຖະກິດມະຫາພາກ
   - ຄວາມສ່ຽງດ້ານການຕະຫຼາດ ແລະ ການແຂ່ງຂັນ
   - ຄວາມສ່ຽງດ້ານລາຍຮັບຈາກຜະລິດຕະພັນບໍ່ຫຼາກຫຼາຍ

b. ຄວາມສ່ຽງທາງດ້ານການເງິນ
   - ຄວາມສ່ຽງຈາກສິນເຊື່ອທີ່ບໍ່ກໍ່ໃຫ້ເກີດລາຍໄດ້ (NPL)
   - ຄວາມສ່ຽງຈາກການເພິ່ງພາແຫຼ່ງເງິນກູ້ພຽງແຫ່ງດຽວ
   - ຄວາມສ່ຽງຈາກການປ່ຽນແປງຂອງອັດຕາດອກເບ້ຍ
   - ຄວາມສ່ຽງທີ່ບໍລິສັດອາດຈະກໍ່ໜີ້ສິນເພີ່ມຂຶ້ນ
   - ຄວາມສ່ຽງຈາກອັດຕາແລກປ່ຽນ
   - ຄວາມສ່ຽງດ້ານສິນຄ້າໃຫ້ເຊົ່າສິນເຊື່ອ ຫຼື ຄ້ຳປະກັນ

c. ຄວາມສ່ຽງໃນການຄຸ້ມຄອງບໍລິຫານ ແລະ ການດຳເນີນການ
   - ຄວາມສ່ຽງຈາກການເພິ່ງພາຜູ້ບໍລິຫານຫຼັກ
   - ຄວາມສ່ຽງດ້ານການຄຸ້ມຄອງບໍລິຫານໂດຍກຸ່ມຜູ້ຖືຮຸ້ນລາຍໃຫຍ່
   - ຄວາມສ່ຽງຈາກລະບົບຄອມພິວເຕີ
   - ຄວາມສ່ຽງທີ່ເກີດຈາກການທຸຈະລິດໂດຍພະນັກງານ ຫຼື ພາກສ່ວນອື່ນ

## 3. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ

### 3.1. ນະໂຍບາຍການບໍລິຫານຄວາມສ່ຽງ (Risk Management Policy)

1) ປັດຊະຍາໃນການບໍລິຫານຄວາມສ່ຽງຂອງບໍລິສັດ (Risk Management Philosophy)
2) ກຳນົດປັດຊະຍາຂອງບໍລິສັດ ຄືດັ່ງນີ້ "ທຸກຄົນ ທຸກເຫດການ ມີຜົນກັບຜົນດຳເນີນ ການຂອງບໍລິສັດ ຈົ່ງເບິ່ງໄກ ແລະ ຮອບດ້ານ"

### 3.2. ລະດັບຄວາມສ່ຽງທີ່ຍອມຮັບໄດ້ (Risks Appetite)

ລະດັບຄວາມສ່ຽງທີ່ຍອມຮັບໄດ້ ໝາຍເຖິງ ລະດັບຄວາມເສຍຫາຍທີ່ບໍລິສັດ ຍອມຮັບໄດ້ ຫາກເກີດເຫດການໃດໆເກີດຂຶ້ນ ແບ່ງອອກເປັນ 4 ປະເດັນ ແລະ 5 ລະດັບຄວາມເສຍຫາຍ ດັ່ງລຸ່ມນີ້:

1) **ປະເດັນຄວາມສ່ຽງ ແບ່ງເປັນ 4 ປະເດັນ ດັ່ງນີ້:**
   - ການເງິນ (Financial)
   - ຊື່ສຽງ (Reputation)
   - ການລະເມີດກົດໝາຍ ຫຼື ກົດລະບຽບຂອງໜ່ວຍງານທີ່ຄຸ້ມຄອງ(Regulator relationship/ against the law)
   - ຄວາມປອດໄພ ແລະ ສະພາບແວດລ້ອມ (Safety and Environment)
2) **ລະດັບຄວາມເສຍຫາຍ ແບ່ງເປັນ 5 ລະດັບ ດັ່ງນີ້ :**
   - ຮ້າຍແຮງທີ່ສຸດ (Worst)
   - ກະທົບຢ່າງຮຸນແຮງ (Severe)
   - ກະທົບຫຼາຍ (Major)
   - ກະທົບປານກາງ (Moderate)
   - ກະທົບເລັກນ້ອຍ (Minor)

### 3.3. ໂຄງສ້າງການບໍລິຫານຄວາມສ່ຽງ(Risk Management Structure)ແບ່ງອອກເປັນ 3 ລະດັບດັ່ງນີ້ :

3.3.1. ສະພາບໍລິຫານ (Board of Committee)

3.3.2. ຄະນະກຳມະການບໍລິຫານຄວາມສ່ຽງ (Risk Committee)

3.3.3. ທີມຜູ້ບໍລິຫານ ແລະ ຫົວໜ້າງານທຸກລະດັບ (Management and Function head)

### 3.4. ຂະບວນການໃນການບໍລິຫານຄວາມສ່ຽງ (Risk Management Process) ແບ່ງອອກເປັນ 3 ຂັ້ນຕອນດັ່ງນີ້ :

1) ລະບຸຄວາມສ່ຽງ ແລະ ໂອກາດ (Identify risks and opportunities)
2) ຈັດການຄວາມສ່ຽງ ແລະ ໂອກາດ (Manage risks and opportunities) ດັ່ງນີ້:
   - ແບ່ງປັນຄວາມສ່ຽງ (Share Risk)

ໂອນຄວາມສ່ຽງອອກໄປ (Transfer Risk)

ຫຼຸດຄວາມສ່ຽງ (Reduce Risk)

ຫລີກລ່ຽງຄວາມສ່ຽງ (Avoid Risk)

3) ຕິດຕາມ ແລະ ລາຍງານຄວາມສ່ຽງ ແລະ ໂອກາດຕ່າງໆ (Monitor and report risks and opportunities)

**3.5. ແຜນບໍລິຫານຄວາມສ່ຽງ ຈະຕ້ອງປະກອບດ້ວຍເນື້ອໃນຢ່າງໜ້ອຍ ດັ່ງນີ້:**

1) ລາຍງານການບໍລິຫານຄວາມສ່ຽງ (Risk Management Report)
2) ແຜນບໍລິຫານຄວາມສ່ຽງ (Risk Management Plan)
3) ລະດັບຄວາມສ່ຽງທີ່ຍອມຮັບໄດ້(Risk Appetite)
4) ລາຍງານຜົນກະທົບ ແລະ ການປະເມີນຄວາມເສຍຫາຍ(Impact and Damage Evaluation Report)
5) ແຜນພາບລະດັບຄວາມສ່ຽງ (Risk Heat Map)
6) ແບບການປະເມີນຄວາມສ່ຽງ (Risk Assessment Form)

## 4. ການໃຫ້ສິນເຊື່ອ

### 4.1 ນະໂຍບາຍການໃຫ້ສິນເຊື່ອ

ບໍລິສັດ ມີນະໂຍບາຍດ້ານສິນເຊື່ອ ໂດຍໄດ້ມີການກຳນົດຄຸນສົມບັດຂອງລູກຄ້າໃຫ້ເປັນໄປຕາມເກນທີ່ໄດ້ກຳນົດໄວ້ໂດຍຫຼັກໆມີຄື: ດ້ານອາຍຸ, ການປະກອບອາຊີບ, ລາຍຮັບຂອງຜູ້ຂໍສິນເຊື່ອ, ຄ່າງວດຜ່ອນຊຳລະ, ໄລຍະເວລາເຊົ່າສິນເຊື່ອ, ທີ່ຢູ່ປະຈຸບັນ, ປະຫວັດຫຍໍ້, ຜູ້ຄ້ຳປະກັນ ແລະ ເອກະສານດ້ານນິຕິກຳຕ່າງໆ ຕ້ອງໄດ້ມີການເຊັນຮັບຮອງຈາກນາຍບ້ານ, ອີງການທະບຽນສານ (ໃນບາງກໍລະນີ) ເພື່ອຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ. ເຖິງແນວໃດກໍ່ຕາມ ບໍລິສັດຈະມີການປັບປຸງແປງດ້ານນະໂຍບາຍສິນເຊື່ອ ໂດຍຈະພິຈາລະນາຈາກສະພາບການແຂ່ງຂັນຂອງຕະຫຼາດ, ສະພາບອຸດສາຫະກຳ ແລະ ເສດຖະກິດ ເພື່ອເຮັດໃຫ້ບໍລິສັດຍັງຮັກສາຄວາມສາມາດໃນການແຂ່ງຂັນ ແລະ ຖານລູກຄ້າຂອງບໍລິສັດຢ່າງໝັ້ນຄົງໃນອະນາຄົດ.

### 4.2 ຂັ້ນຕອນການອະນຸມັດການເຊົ່າສິນເຊື່ອ

ບໍລິສັດມີການພິຈາລະນາໃຫ້ເຊົ່າສິນເຊື່ອ 2 ຂັ້ນຕອນຄື: ການພິຈາລະນາຄຸນສົມບັດຂອງຜູ້ຂໍເຊົ່າສິນເຊື່ອ (ລູກຄ້າ) ແລະ ການອະນຸມັດການໃຫ້ເຊົ່າສິນເຊື່ອ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

4.2.1 ການພິຈາລະນາຄຸນສົມບັດຂອງຜູ້ຂໍເຊົ່າສິນເຊື່ອ (ລູກຄ້າ)

1) ລູກຄ້າສະແດງຈຸດປະສົງທີ່ຈະຊື້ສິນຄ້າທີ່ຂໍເຊົ່າສິນເຊື່ອຈາກຮ້ານຄ້າຕົວແທນ ຈຳໜ່າຍ

2) ເຈົ້າໜ້າທີ່ສິນເຊື່ອ ຈະແຈ້ງລາຍລະອຽດການໃຫ້ເຊົ່າສິນເຊື່ອ ຄື: ປະເພດສິນຄ້າທີ່ຂໍເຊົ່າສິນເຊື່ອ, ການວາງເງິນດາວ, ໄລຍະເວລາການເຊົ່າສິນເຊື່ອ, ຄ່າຜ່ອນຊຳລະຕໍ່ງວດ, ຄ່າທຳນຽມ ແລະ ເອກະສານໃນການປະກອບເພື່ອຂໍເຊົ່າສິນເຊື່ອ.

3) ເຈົ້າໜ້າທີ່ສິນເຊື່ອ ຈະກວດສອບຂໍ້ມູນຕາມຊຸດແບບຟອມເອກະສານຂອງບໍລິສັດທີ່ລູກຄ້າໄດ້ປະກອບແລ້ວ ພ້ອມດ້ວຍເອກະສານຄັດຕິດຄື: ສຳເນົາບັດປະຈຳຕົວ, ສຳເນົາປຶ້ມສຳມະໂນຄົວສຳເນົາລາຍການເຄື່ອນໄຫວທາງການເງິນ (ບັນຊີຝາກປະຢັດທີ່ເປັນບັນຊີເງິນເດືອນ ກໍລະນີທີ່ເປັນລູກຄ້າທີ່ມີລາຍຮັບປະຈຳ) ໂດຍທີ່ຜູ້ຂໍເຊົ່າສິນເຊື່ອຕ້ອງສະແດງເອກະສານຄັດຕິດຕົ້ນສະບັບພ້ອມທັງຜູ້ຄ້ຳປະກັນ ຊ່ອງໜ້າກັບເຈົ້າໜ້າທີ່ ຕອນຍື່ນເອກະສານ ຫຼັງຈາກນັ້ນ ເຈົ້າໜ້າທີ່ວິເຄາະສິນເຊື່ອຈະກວດສອບຄວາມຖືກຕ້ອງຂອງເອກະສານ.

ໃນກໍລະນີທີ່ລູກຄ້າບໍ່ມີເອກະສານທາງການເງິນ ເຈົ້າໜ້າທີ່ສິນເຊື່ອຕ້ອງກວດສອບຂໍ້ມູນກັບທາງຫ້ອງການບ້ານຂອງລູກຄ້າຕາມທີ່ລູກຄ້າໄດ້ໃຫ້ຂໍ້ມູນໄວ້ ພ້ອມທັງລົງໄປເຖິງເຮືອນຂອງຜູ້ຂໍສິນເຊື່ອ, ບ່ອນເຮັດວຽກ, ມີການຖ່າຍຮູບ, ມີການສອບຖາມຂໍ້ມູນຈາກເພື່ອນບ້ານຕົວຈິງ.

4) ເຈົ້າໜ້າທີ່ສິນເຊື່ອຈະປະສານງານໄປຫາ ເຈົ້າໜ້າທີ່ຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ ຢູ່ສຳນັກງານໃຫຍ່ ໂດຍແຈ້ງລາຍລະອຽດຂອງລູກຄ້າຕາມຊຸດແບບຟອມເອກະສານຢ່າງຄົບຖ້ວນ ແລະ ຖືກຕ້ອງ ເພື່ອບັນທຶກຂໍ້ມູນລົງໃນລະບົບຄອມພິວເຕີຂອງບໍລິສັດ ຊຶ່ງຈະເປັນການກວດສອບປະຫວັດການໃຊ້ບໍລິການຂອງລູກຄ້າທີ່ຜ່ານມາ ແລະ ສົ່ງຂໍ້ມູນ ໃຫ້ຫົວໜ້າຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ. ໃນກໍລະນີທີ່ເຈົ້າໜ້າທີ່ຝ່າຍວິເຄາະແລະອະນຸມັດສິນເຊື່ອ ຫາກກວດສອບຂໍ້ມູນແລ້ວພົບວ່າ ລູກຄ້າມີປະຫວັດບໍ່ດີ ຫຼື ບໍ່ຖືກຕາມເກນການຂໍເຊົ່າສິນເຊື່ອຂອງບໍລິສັດ ເຈົ້າໜ້າທີ່ວິເຄາະສິນເຊື່ອຈະໄດ້ແຈ້ງເຈົ້າໜ້າທີ່ສິນເຊື່ອ ປະຕິເສດການຂໍສິນເຊື່ອນັ້ນທັນທີ.

4.2.2 ການອະນຸມັດການໃຫ້ເຊົ່າສິນເຊື່ອ

1) ຫົວໜ້າຝ່າຍວິເຄາະ ແລະ ອະນຸມັດສິນເຊື່ອ ກວດສອບຊຸດຂໍ້ມູນຕ່າງໆທີ່ບັນທຶກໃນລະບົບຄອມພິວເຕີ ຕາມການກວດກາຂອງເຈົ້າໜ້າທີ່ວິເຄາະສິນເຊື່ອ ໂດຍຈະພິຈາລະນາ ອີງຕາມມາດຖານ ແລະ ເງື່ອນໄຂຂອງບໍລິສັດໄດ້ກຳນົດຫຼັກໆຄື: ລູກຄ້າຕ້ອງມີລາຍຮັບພຽງພໍຕໍ່ຄວາມສາມາດໃນການຊຳລະໜີ້, ຄວາມໝັ້ນຄົງຂອງອາຊີບ, ທີ່ຢູ່ອາໄສທີ່ສາມາດຕິດຕາມໄດ້ ແລະ ເງື່ອນໄຂອື່ນໆ ທີ່ເປັນໄປຕາມເກນມາດຖານທີ່ບໍລິສັດໄດ້ກຳນົດໄວ້.

ຢ່າງໃດກໍ່ຕາມ, ເຖິງແມ່ນວ່າ ລູກຄ້າຜູ້ຂໍເຊົ່າສິນເຊື່ອຈະມີປະຫວັດດີຈາກການຄົ້ນຫາປະຫວັດໃນຖານຂໍ້ມູນຕ່າງໆຂອງບໍລິສັດ ແຕ່ບໍລິສັດສາມາດພິຈາລະນາປະຕິເສດການໃຫ້ສິນເຊື່ອທັນທີ ຖ້າເຫັນວ່າລູກຄ້າມີທ່າອ່ຽງຈະບໍ່ສາມາດຊຳລະເງິນຄ່າງວດ ຫຼື ມີຂໍ້ມູນວ່າລູກຄ້າມີພາລະຄ້າງຊຳລະເງິນກູ້ຈາກຜູ້ໃຫ້ການບໍລິການເຊົ່າສິນເຊື່ອລາຍອື່ນ. ໃນການພິຈາລະນາການອະນຸມັດເຊົ່າສິນເຊື່ອຈາກປັດໄຈທີ່ກ່າວຂ້າງເທິງນີ້ ບໍລິສັດ ມີຫຼັກການດັ່ງນີ້:

- ໃນກໍລະນີທີ່ລູກຄ້າບໍ່ມີເອກະສານທາງການເງິນ: ຈະພິຈາລະນາຈາກລູກຄ້າ ແລະ ຜູ້ຄ້ຳປະກັນ ຄື: ສຳເນົາບັດປະຈຳຕົວ ພ້ອມທັງສະແດງຫຼັກຖານບັດປະຈຳຕົວຕົ້ນສະບັບຕໍ່ເຈົ້າໜ້າທີວິເຄາະສິນເຊື່ອ ແລະ ຕ້ອງມີການຢັ້ງຢືນການລົງໄປກວດສອບເຖິງສະຖານທີ່ ຫ້ອງການບ້ານຂອງລູກຄ້າຕາມທີ່ລູກຄ້າໄດ້ໃຫ້ຂໍ້ມູນໄວ້ ພ້ອມທັງລົງໄປເຖິງເຮືອນຂອງຜູ້ຂໍສິນເຊື່ອ, ຖ່າຍຮູບຄົນ ແລະ ເຮືອນ, ມີການສອບຖາມຂໍ້ມູນຈາກເພື່ອນບ້ານ ເປັນຕົ້ນ.

- ໃນກໍລະນີທີ່ລູກຄ້າທີ່ມີເອກະສານທາງການເງິນ: ຈະພິຈາລະນາຈາກລູກຄ້າ ແລະ ຜູ້ຄໍ້າປະກັນຄື: ສໍາເນົາບັດປະຈໍາຕົວ, ສໍາເນົາປຶ້ມສໍາມະໂນຄົວ ແລະ ສໍາເນົາລາຍການເຄື່ອນໄຫວທາງການເງິນ (ບັນຊີຝາກປະຢັດທີ່ເປັນບັນຊີເງິນເດືອນ) ແລະ ເອກະສານຢັ້ງຢືນເງິນເດືອນ ເປັນຕົ້ນ ພ້ອມທັງສະແດງຫຼັກຖານຕົວຈິງຕໍ່ເຈົ້າໜ້າທີ່ ວິເຄາະສິນເຊື່ອ.

2) ການອະນຸມັດວົງເງິນເຊົ່າສິນເຊື່ອ ຈະຖືກກໍານົດຕາມນະໂຍບາຍຂອງບໍລິສັດຊຶ່ງກໍານົດຈາກລາຄາຂອງສິນຄ້າທີ່ຂໍເຊົ່າສິນເຊື່ອ, ຍີ່ຫໍ້ ແລະ ລຸ້ນຂອງສິນຄ້າທີ່ຂໍເຊົ່າສິນເຊື່ອ ທີ່ລູກຄ້າເລືອກ ຈາກຮ້ານຕົວແທນຈໍາໜ່າຍ ແລະ ຈະຕ້ອງເປັນສິນຄ້າທີ່ຂໍເຊົ່າສິນເຊື່ອ ທີ່ນອນຢູ່ໃນລາຍການຂອງບໍລິສັດໄດ້ກໍານົດ.

3) ພາຍຫຼັງການເຊົ່າສິນເຊື່ອໄດ້ຮັບການອະນຸມັດແລ້ວ ເຈົ້າໜ້າທີ່ສິນເຊື່ອຈະແຈ້ງຜົນການພິຈາລະນາ ແລະ ວົງເງິນໃຫ້ຜູ້ຂໍເຊົ່າສິນເຊື່ອຊາບ.

## 4.3 ຂັ້ນຕອນການດໍາເນີນງານພາຍຫຼັງການອະນຸມັດສິນເຊື່ອ

ບໍລິສັດມີຂັ້ນຕອນການດໍາເນີນງານພາຍຫຼັງອະນຸມັດສິນເຊື່ອມີດັ່ງນີ້:

1) ຕິດຕາມການຂຶ້ນທະບຽນສິນຄ້າທີ່ຂໍເຊົ່າສິນເຊື່ອ (ຖ້າຈໍາເປັນເຊັ່ນ ລົດໃໝ່) ແລະ ສົ່ງມອບເອກະສານສໍາຄັນແກ່ລູກຄ້າ

ພາຍຫຼັງທີ່ໄດ້ຮັບການພິຈາລະນາ ແລະ ອະນຸມັດ ເຊົ່າສິນເຊື່ອແລ້ວ ບໍລິສັດກໍ່ຈະຊໍາລະເງິນຄ່າຊື້ລົດສ່ວນທີ່ເຫຼືອຂອງລູກຄ້າ (ລູກໜີ້) ໃຫ້ແກ່ຮ້ານຕົວແທນຈໍາໜ່າຍ ແລະ ຮ້ານຄ້າຕົວແທນຈໍາໜ່າຍລົດຈັກຈະເປັນຜູ້ດໍາເນີນການຂຶ້ນທະບຽນລົດຈັກໃຫ້ລູກຄ້າ ຊຶ່ງຈະຕ້ອງດໍາເນີນການຂຶ້ນທະບຽນສິນຄ້າທີ່ຂໍເຊົ່າສິນເຊື່ອ ໃຫ້ສໍາເລັດພາຍໃນ 90 ວັນນັບຈາກວັນທີ່ເຊັນສັນຍາກັບບໍລິສັດ. ພ້ອມກັນນັ້ນ ບໍລິສັດກໍ່ຈະມອບບັນດາເອກະສານເຊົ່າສິນເຊື່ອໃຫ້ລູກຄ້າ ເຊັ່ນ: ສັນຍາເຊົ່າສິນເຊື່ອ, ໜັງສືຄໍ້າປະກັນ ເປັນຕົ້ນ. ຫຼັງຈາກທີ່ລູກຄ້າໄດ້ສໍາເລັດການປະຕິບັດສັນຍາເຊົ່າສິນເຊື່ອຄົບຖ້ວນແລ້ວ ກໍາມະສິດລົດຈັກຈະຖືກໂອນຄືນໃຫ້ລູກຄ້າ.

ຖ້າກໍລະນີ ໄລຍະເວລາການອອກທະບຽນສິນຄ້າທີ່ຂໍເຊົ່າສິນເຊື່ອເກີດການຊັກຊ້າ ຫຼື ຫຼາຍກວ່າ 90 ວັນ ເຈົ້າໜ້າທີ່ຜູ້ທີ່ຕິດຕາມວຽກງານການຂຶ້ນທະບຽນລົດ ກໍ່ຈະລາຍງານໄປຍັງຜູ້ຈັດການຝ່າຍສິນເຊື່ອແລະການຕະຫຼາດ ໃຫ້ຮັບຊາບ ເພື່ອຫາວິທີແກ້ໄຂບັນຫາດັ່ງກ່າວ.

2) ຕິດຕາມ ແລະ ຮຽກເກັບໜີ້

ບໍລິສັດຈະມີເຈົ້າໜ້າທີ່ ພະແນກເກັບ ແລະ ບໍລິຫານໜີ້ ຕິດຕາມວຽກງານດ້ານການຊໍາລະເງິນ ຫຼື ເກັບເງິນຄ່າງວດຂອງລູກຄ້າ (ລູກໜີ້) ທຸກລາຍຢ່າງໃກ້ຊິດ ຊຶ່ງຈະໄດ້ຕິດຕາມທັງລູກຄ້າ ແລະ ຜູ້ຄໍ້າປະກັນ. ໃນກໍລະນີສິນຄ້າທີ່ຂໍເຊົ່າສິນເຊື່ອທີ່ເປັນຫຼັກຄໍ້າປະກັນຖືກສົ່ງຕໍ່ໃຫ້ບຸກຄົນອື່ນເປັນຜູ້ນໍາໃຊ້ລົດພະນັກງານກໍ່ຈໍາເປັນຕ້ອງໄດ້ຕິດຕາມຜູ້ໃຊ້ລົດນັ້ນຕື່ມອີກ. ສໍາລັບການຊໍາລະເງິນຄ່າງວດ ລູກຄ້າແມ່ນສາມາດຊໍາລະໄດ້ໃນ 4 ຊ່ອງທາງຄື:

ລູກຄ້າສາມາດເຂົ້າມາຊໍາລະເງິນໄດ້ທີ່ບໍລິສັດໂດຍກົງ

ລູກຄ້າຕິດຕໍ່ການຊໍາລະທີ່ຈຸດບໍລິການຊໍາລະເງິນຂອງບໍລິສັດທີ່ຕັ້ງຢູ່ໃນຮ້ານຄ້າຕົວແທນຈໍາໜ່າຍລົດຈັກພັນທະມິດ (Pay point)

ຊຳລະຜ່ານປ່ອງບໍລິການຂອງທະນາຄານ ໂດຍການໂອນເງິນເຂົ້າໄປຊຳລະໃນບັນຊີທີ່ບໍລິສັດໄດ້ກຳນົດໄວ້

ນັດໝາຍໃຫ້ພະນັກງານທີ່ພົວພັນວຽກງານການຊຳລະເງິນ ຫຼື ເກັບເງິນຄ່າງວດນຳລູກຄ້າຕາມສະຖານທີ່ ທີ່ໄດ້ຕົກລົງກັນລ່ວງໜ້າກັບລູກຄ້າໄວ້ແລ້ວ ຊຶ່ງລູກຄ້າຕ້ອງເສຍຄ່າທຳນຽມເພີ່ມ

3) ການບໍລິຫານໜີ້ ແລະ ຍຶດສິນຄ້າທີ່ຂໍເຊົ່າສິນເຊື່ອ

ບໍລິສັດມີການນຳໃຊ້ລະບົບໂປຣແກຣມຄອມພິວເຕີໃນການບໍລິຫານສິນເຊື່ອ ສະນັ້ນຈຶ່ງເຮັດໃຫ້ບໍລິສັດມີການບໍລິຫານໜີ້ ແລະ ຕິດຕາມຫຼັກຊັບເຊົ່າສິນເຊື່ອຢ່າງມີປະສິດທິພາບ ຊຶ່ງເມື່ອມີການຄ້າງຊຳລະເງິນຄ່າງວດເກີນກວ່າກຳນົດ ລະບົບໂປຣແກຣມຄອມພິວເຕີຈະແຈ້ງເຕືອນໃຫ້ເຈົ້າໜ້າທີ່ຊາບເພື່ອດຳເນີນການຕິດຕາມ ຊຶ່ງບໍລິສັດມີຫຼັກການໃນການດຳເນີນການດັ່ງນີ້:

ໃນກໍລະນີລູກຄ້າຄ້າງຊຳລະເງິນຄ່າງວດ 3 - 5 ວັນ ບໍລິສັດຈະໃຫ້ເຈົ້າໜ້າທີ່ຕິດຕໍ່ລູກຄ້າຜ່ານທາງໂທລະສັບ ເພື່ອຕິດຕາມ, ແຈ້ງເຕືອນການຊຳລະເງິນຄ່າງວດ ພ້ອມທັງບັນທຶກຂໍ້ມູນການເຈລະຈາ ຫຼື ມີການນັດພົບໃນກໍລະນີຈຳເປັນ.

ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນ 30 ວັນ ຫຼື 1 ງວດ ບໍລິສັດຈະສົ່ງໃຫ້ເຈົ້າໜ້າທີ່ຕິດຕາມທັນທີ.

ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນ 90 ວັນ ຫຼື 3 ງວດຂຶ້ນໄປ ບໍລິສັດຈະສົ່ງເຈົ້າໜ້າທີ່ຕິດຕາມຍຶດລົດຄືນ, ຊຶ່ງຈະລົງຕິດຕາມເຖິງບ້ານ ຫຼື ສະຖານທີ່ເຮັດວຽກຂອງ ລູກຄ້າ ແລະ ຜູ້ຄໍ້າປະກັນ ພ້ອມກັນນັ້ນ ບໍລິສັດອາດຈະພິຈາລະນາໃນການຍົກເລີກສັນຍາເຊົ່າສິນເຊື່ອເລີຍ ຖ້າເຫັນວ່າລູກຄ້າອາດຈະບໍ່ສາມາດຈ່າຍເງິນຄ່າງວດໄດ້ໃນອານາຄົດ.

ໃນກໍລະນີ ລູກຄ້າຄ້າງຊຳລະເງິນຄ່າງວດເກີນກວ່າ 3 ງວດຂຶ້ນໄປ ພ້ອມທັງຫຼົບໜີ ຊຶ່ງບໍລິສັດບໍ່ສາມາດຍຶດຫຼັກຊັບຄືນມາໄດ້ ບໍລິສັດຈະດຳເນີນການດ້ານກົດໝາຍກັບລູກຄ້າ ແລະ ຜູ້ຄໍ້າປະກັນຕໍ່ໄປ.

4) ການຂາຍສິນຄ້າທີ່ຂໍເຊົ່າສິນເຊື່ອທີ່ຍຶດມາ

ຫຼັງຈາກທີ່ສາມາດຍຶດສິນຄ້າທີ່ຂໍເຊົ່າສິນເຊື່ອທີ່ເປັນຫຼັກຊັບຄໍ້າປະກັນມາແລ້ວ ບໍລິສັດຈະໃຫ້ເຈົ້າໜ້າທີ່ດຳເນີນການແຈ້ງ ສິດໃນການໄຖ່ຖອນລົດຈັກຄືນ. ຖ້າຫາກວ່າໝົດກຳນົດເວລາໃຊ້ສິດດັ່ງກ່າວຕາມກົດໝາຍ ບໍລິສັດຈະດຳເນີນການຂາຍສິນຄ້າທີ່ຂໍເຊົ່າສິນເຊື່ອສູ່ທ້ອງຕະຫຼາດ ໂດຍຈະດຳເນີນການປະມູນຂາຍໃຫ້ແກ່ພາຍນອກ ຊຶ່ງບໍລິສັດຈະມີເຈົ້າໜ້າທີ່ປະເມີນລາຄາລົດຈັກດັ່ງກ່າວ ເພື່ອເຮັດໃຫ້ລາຄາເໝາະສົມທີ່ສຸດອີງຕາມສະພາບ ແລະ ລາຄາຕະຫຼາດໃນຕອນນັ້ນ.

ໃນກໍລະນີຂາຍສິນຄ້າທີ່ຂໍເຊົ່າສິນເຊື່ອແລ້ວ ຫາກມູນຄ່າສິນຄ້າທີ່ຂໍເຊົ່າສິນເຊື່ອບໍ່ພຽງພໍຕໍ່ການຊຳລະໜີ້ທີ່ຍັງຄ້າງຕາມສັນຍາ ບໍລິສັດຈະດຳເນີນການເຈລະຈາ, ຕົກລົງກັບລູກຄ້າ ແລະ ຜູ້ຄໍ້າປະກັນໃນການຊຳລະເງິນສ່ວນທີ່ເຫຼືອ. ຫາກການເຈລະຈາບໍ່ສາມາດຕົກລົງກັນໄດ້ ບໍລິສັດຈະດຳເນີນການທາງກົດໝາຍຕໍ່ໄປ.

ຖ້າກໍລະນີການຂາຍສິນຄ້າທີ່ຂໍເຊົ່າສິນເຊື່ອ ຫາກໄດ້ເງິນຫຼາຍກວ່າໜີ້ຄ້າງຊຳລະຕາມສັນຍາແລ້ວ ບໍລິສັດຈະດຳເນີນການສົ່ງເງິນຄືນໃຫ້ລູກຄ້າຕາມຈຳນວນທີ່ເກີນ.

5) ການປິດບັນຊີ ແລະ ການໂອນກຳມະສິດສິນຄ້າທີ່ຂໍເຊົ່າສິນເຊື່ອ (ຖ້າຈຳເປັນເຊັ່ນ: ລົດຈັກ)

ບໍລິສັດຈະປິດບັນຊີລູກຄ້າໄດ້ 2 ກໍລະນີຄື:

ກໍລະນີປິດບັນຊີຕາມກຳນົດສັນຍາ: ກໍລະນີດັ່ງກ່າວແມ່ນຈະເກີດຂຶ້ນກໍ່ຕໍ່ເມື່ອລູກຄ້າ (ລູກໜີ້)ໄດ້ຈ່າຍເງິນຄ່າງວດ ແລະ ຄ່າທຳນຽມຕ່າງໆ ລວມໄປເຖິງຄ່າໃຊ້ຈ່າຍອື່ນໆທີ່ກ່ຽວພັນໃຫ້ແກ່ບໍລິສັດຄົບຖ້ວນ ສັນຍາດັ່ງກ່າວກໍ່ຈະສິ້ນສຸດລົງ ພ້ອມທັງສິ່ງເອກະສານທີ່ຕິດພັນກັບສັນຍາໃຫ້ລູກຄ້າທັງໝົດ.

ກໍລະນີປິດບັນຊີກ່ອນກຳນົດສັນຍາ: ບໍລິສັດອະນຸຍາດໃຫ້ລູກຄ້າຈ່າຍໜີ້ຂອງຕົນໝົດກ່ອນກຳນົດສັນຍາ ຊຶ່ງລູກຄ້າ (ລູກໜີ້)ຈະໄດ້ຮັບນະໂຍບາຍຈາກບໍລິສັດໂດຍໄດ້ຮັບສ່ວນຫຼຸດ 50 ສ່ວນຮ້ອຍຈາກດອກເບ້ຍທີ່ຕ້ອງຈ່າຍສ່ວນທີ່ເຫຼືອ, ທັງນີ້ ແມ່ນເພື່ອເປັນການກະຕຸ້ນ ແລະ ສ້າງແຮງຈູງໃຈ ໃຫ້ລູກຄ້າ (ລູກໜີ້)ມີຄວາມກະຕືລືລົ້ນໃນການຊຳລະໜີ້ສິນໃຫ້ໝົດກ່ອນກຳນົດເວລາ, ຊຶ່ງອັດຕາສ່ວນຫຼຸດດັ່ງກ່າວຈະຂຶ້ນກັບນະໂຍບາຍຂອງບໍລິສັດໃນແຕ່ລະໄລຍະ.

## 5. ໂຄງສ້າງທຶນຂອງບໍລິສັດ

### 5.1 ໂຄງສ້າງຜູ້ຖືຮຸ້ນ

ອັດຕາສ່ວນຜູ້ຖືຮຸ້ນຂອງບໍລິສັດກ່ອນ ແລະ ລ່າສຸດ

| ຜູ້ຖືຮຸ້ນ | ກ່ອນການອອກຈຳໜ່າຍຮຸ້ນ IPO | | ລ່າສຸດ | |
|---|---|---|---|---|
| | ຈຳນວນຮຸ້ນ | ອັດຕາສ່ວນຮ້ອຍ | ຈຳນວນຮຸ້ນ | ອັດຕາສ່ວນຮ້ອຍ |
| 1) ບໍລິສັດ ມະຫະທຸນ ໂຮນດິ້ງຈຳກັດ | 27.088.000 | 97,5792507204611% | 39.999.040 | 9,99976% |
| 2) ທ່ານ ນາງ ອິນທະວີໄລ ອຸດົມ | 671.912 | 2,4204322766571% | 80 | 0,00002% |
| 3) ທ່ານ ນາງ ທະນົງລັກ ອຸດົມ | 8 | 0,0000288184438% | 80 | 0,00002% |
| 4) ທ່ານ ທະນົງສັກ ອຸດົມ | 8 | 0,0000288184438% | 80 | 0,00002% |
| 5) ທ່ານ ສັງຄົມ ຈັນສຸກ | 8 | 0,0000288184438% | 80 | 0,00002% |
| 6) ທ່ານ ຊາຄຣິດ ນັກສອນ | 8 | 0,0000288184438% | 80 | 0,00002% |
| 7) ທ່ານນາງ ປຣາດຖະໜາ ນັກສອນ | 8 | 0,0000288184438% | 80 | 0,00002% |
| 8) ທ່ານ ນາງ ຈິດຕິມາ ນັກສອນ | 8 | 0,0000288184438% | 80 | 0,00002% |
| 9) ທ່ານ ນາງ ສຸທິດາ ນັກສອນ | 8 | 0,0000288184438% | 80 | 0,00002% |
| 10) ທ່ານ ກຣຽງໄກ ນິດສະຍັນ | 8 | 0,0000288184438% | 80 | 0,00002% |
| 11) ທ່ານ ມານົບ ຕຣີລິດວິໄລ | 8 | 0,0000288184438% | 80 | 0,00002% |
| 12) ທ່ານ ທອງຖະຫວັນ ທອງແຖມ | 8 | 0,0000288184438% | 80 | 0,00002% |
| 13) ທ່ານ ຊັດພົນໄຊ ປັນຍາທຳບະດີ | 8 | 0,0000288184438% | 80 | 0,00002% |

| | | | | |
|---|---|---|---|---|
| Free Float<br>1. ບໍລິສັດ ມະຫະທຸນ ໂຮນດິ້ງຈຳກັດ<br>2. ນັກລົງທຶນທົ່ວໄປ | - | - | 230.880.960<br>129.119.040 | 57,72024%<br>32,27976% |
| ລວມ | 27.760.000 | 100% | 400.000.000 | 100% |

ໃນປີ 2021, ບໍລິສັດໄດ້ສຳເລັດການແຕກຮຸ້ນເມື່ອວັນທີ 24 ມິຖຸນາ 2021 ເຊິ່ງມູນຄ່າຮຸ້ນເທົ່າກັບ 100 ກີບຕໍ່ຮຸ້ນ ແລະ ຈຳນວນຮຸ້ນທັງໝົດເທົ່າກັບ 400.000.000 ຮຸ້ນ ໂດຍມີສັດສ່ວນຮຸ້ນສ້າງຕັ້ງ 10 ສ່ວນຮ້ອຍ ແລະ 90 ສ່ວນຮ້ອຍ ເປັນຮຸ້ນ Floating.




## 5.2 ນະໂຍບາຍການແບ່ງເງິນປັນຜົນ

ບໍລິສັດມີນະໂຍບາຍໃນການຈ່າຍເງິນປັນຜົນບໍ່ຫຼຸດ 50 ສ່ວນຮ້ອຍ (50%) ຂອງກຳໄລສຸດທິ ຕາມເອກະສານທາງການເງິນຂອງບໍລິສັດ ພາຍຫຼັງຫັກເຂົ້າຄັງສຳຮອງຕາມກົດໝາຍ. ເຖິງຢ່າງໃດກໍ່ຕາມ, ການຈ່າຍເງິນປັນຜົນດັ່ງກ່າວຈະຂຶ້ນຢູ່ກັບແຜນການລົງທຶນ, ຄວາມຈຳເປັນ ແລະ ຄວາມເໝາະສົມອື່ນໆ ໃນອະນາຄົດ ເມື່ອສະພາບໍລິຫານຂອງບໍລິສັດ (Board of Directors) ມີມະຕິເຫັນດີໃຫ້ບໍລິສັດຈ່າຍເງິນປັນຜົນປະຈຳປີ ໂດຍຕ້ອງສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນໄດ້ພິຈາລະນາ ແລະ ອະນຸມັດເສຍກ່ອນ, ເວັ້ນເສຍແຕ່ວ່າການຈ່າຍເງິນປັນຜົນລະຫວ່າງປີນັ້ນ ແລະ ກອງປະຊຸມຜູ້ຖືຮຸ້ນຍັງໄດ້ອະນຸມັດໃຫ້ສິດອຳນາດແກ່ສະພາບໍລິຫານຂອງບໍລິສັດ (Board of Directors) ໃຫ້ມີອຳນາດໃນການອະນຸມັດຈ່າຍເງິນປັນຜົນລະຫວ່າງປີໄດ້ ໂດຍຕ້ອງລາຍງານໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຊາບ ແລະ ຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ

### ຕາຕະລາງການຈ່າຍເງິນປັນຜົນ 5 ປີທີ່ຜ່ານມາ

| | ຜົນການດຳເນີນການປີ 2018 | ຜົນການດຳເນີນການປີ 2019 | ຜົນການດຳເນີນການປີ 2020 | ຜົນການດຳເນີນການປີ 2021 | ຜົນການດຳເນີນການປີ 2022 |
|---|---|---|---|---|---|
| ກຳໄລສຸທິປະຈຳປີ (Net Profit after Tax) | 6,593.6 ລ້ານກີບ | 8,084.6 ລ້ານກີບ | 7,744.8 ລ້ານກີບ | 7,591.6 ລ້ານກີບ | 1,047.6 ລ້ານກີບ |
| ອັດຕາການຈ່າຍເງິນປັນຜົນຕໍ່ກຳໄລສຸທິ (Dividend ratio) | 89.18 % | 49.48 % | 80.05 % | 30.03 % | - |
| ເງິນປັນຜົນຕໍ່ຮຸ້ນ (Dividend per Share) | 14.7 ກີບ | 10.0 ກີບ | 15.5 ກີບ | 5.7 ກີບ | 0.0 ກີບ |
| ຈຳນວນເງິນປັນຜົນ (Dividend paid amount) | 5,880.0 ລ້ານກີບ | 4,000.0 ລ້ານກີບ | 6,200.0 ລ້ານກີບ | 2,280.0 ລ້ານກີບ | 0.0 ລ້ານກີບ |

## 6. ປັດຊະຍາ ແລະ ການດຳເນີນທຸລະກິດຫຼັກ

### 6.1 ປັດຊະຍາບໍລິສັດ

**ຄຳຂວັນ (Slogan)**

"ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ"

"All Finances are possible here"

**ວິໄສທັດ (Vision)**

"ມະຫະທຶນ ຈະເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ເປັນຜູ້ນຳໃນທຸລະກິດເຊົ່າສິນເຊື່ອໃນ ສປປ. ລາວ"

"We will be one of the good corporate governance companies on the Lao Securities Exchange and the leader of the Leasing business in Lao PDR"

**ພາລະກິດ (Mission)**

"ທຸກເລື່ອງສິນເຊື່ອເປັນໄປໄດ້ທີ່ ມະຫະທຶນ" ຄືຄຳໝັ້ນສັນຍາໃນການດຳເນີນທຸລະກິດຂອງເຮົາທີ່ໃຫ້ກັບຜູ້ທີ່ມີສ່ວນໄດ້ສ່ວນເສຍ ໂດຍມີພາລະກິດດັ່ງນີ້:

**ຕໍ່ລູກຄ້າ** : ເປັນໜຶ່ງໃນໃຈລູກຄ້າດ້ວຍທີມງານມືອາຊີບໃຫ້ບໍລິການທີ່ປະທັບໃຈ ຍຸດຕິທຳ ແລະ ນະວັດຕະກຳທາງການເງິນທີທັນສະໄໝ

**ຕໍ່ພະນັກງານ** : ພັດທະນາບຸກຄະລາກອນໃຫ້ເປັນມືອາຊີບ ແລະ ສ້າງຄວາມໝັ້ນຄົງໃນຊີວິດການເຮັດວຽກງານ ແລະ ຊີວິດຄອບຄົວ

**ຕໍ່ຜູ້ຖືຮຸ້ນ** : ເປັນໜຶ່ງບໍລິສັດໃນຕະຫຼາດຫຼັກຊັບລາວທີ່ມີການປົກຄອງທີ່ດີ ແລະ ໃຫ້ຜົນຕອບແທນໃນລະດັບທີ່ໜ້າລົງທຶນ

**ຕໍ່ຄູ່ຄ້າ** : ສ້າງຄວາມໄວ້ວາງໃຈຕໍ່ພັນທະມິດທາງທຸລະກິດທີ່ພ້ອມຈະເຕີບໂຕ ແລະ ປະສົບຄວາມສຳເລັດໄປນຳກັນ

**ຕໍ່ສັງຄົມ** : ເພື່ອເປັນທາງເລືອກໃນການລົງທຶນສຳລັບປະຊາຊົນລາວ

### 6.2 ການດຳເນີນທຸລະກິດຫຼັກ

ບໍລິສັດປະກອບທຸລະກິດການໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍແບ່ງອອກເປັນ 3 ລັກສະນະການໃຫ້ບໍລິການດັ່ງນີ້:

1. ບໍລິການເຊົ່າສິນເຊື່ອລົດຈັກໃໝ່ (ລົດມືໜຶ່ງ)
2. ບໍລິການເຊົ່າສິນເຊື່ອລົດທີ່ໃຊ້ແລ້ວ (ລົດມືສອງ)
3. ບໍລິການເຊົ່າສິນເຊື່ອລົດຈັກຄືນໃຫມ່
4. ບໍລິການເຊົ່າສິນເຊື່ອຜ່ອນຄຳ

#### 6.2.1. ບໍລິການເຊົ່າສິນເຊື່ອລົດຈັກໃໝ່ (ມືໜຶ່ງ)

ບໍລິສັດ ປະກອບທຸລະກິດໃຫ້ບໍລິການເຊົ່າສິນເຊື່ອລົດຈັກ ໂດຍເນັ້ນລົດຈັກຍີ່ຫໍ້ຈາກປະເທດຍີ່ປຸ່ນທີ່ໄດ້ຮັບຄວາມນິຍົມຂອງຕະຫຼາດໄດ້ແກ່:ຮອນດ້າ (HONDA), ຢາມາຮາ (YAMAHA), ຊູຊູກິ (SUSUKI) ແລະ ອື່ນໆ ໂດຍປະມານ 90 ສ່ວນຮ້ອຍຂອງລົດຈັກທີ່ໃຫ້ບໍລິການເຊົ່າສິນເຊື່ອທັງໝົດ ຈະເປັນລົດຈັດຍີ່ຫໍ້ຮອນດ້າ HONDA ໃນນັ້ນມີກຸ່ມລູກຄ້າເປົ້າໝາຍຄື ກຸ່ມລູກຄ້າລາຍຍ່ອຍທົ່ວໄປ ເຊິ່ງມີລາຍຮັບໝັ້ນຄົງລະດັບໜ້ອຍ ເຖິງ ປານກາງ.

ທັງນີ້ ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກເມື່ອລູກຄ້າຕ້ອງການຊື້ລົດຈັກນຳຮ້ານຕົວແທນຈຳ ໜ່າຍລົດ ແຕ່ບໍ່ມີເງິນພຽງພໍ ຫຼື ຕ້ອງການຈ່າຍແບບຜ່ອນລູກຄ້າກໍ່ຈະວາງເງິນດາວ (ວາງເງິນຂັ້ນຕ່ຳ) ຈຳນວນໜຶ່ງ, ສ່ວນຈຳນວນທີ່ເຫຼືອລູກຄ້າຈະເຮັດສັນຍາເຊົ່າສິນເຊື່ອກັບບໍລິສັດ ເຊິ່ງລູກຄ້າທີ່ຕົກລົງເຮັດສັນຍາເຊົ່າສິນເຊື່ອ ກັບບໍລິສັດ ຈະຈ່າຍເງິນຊຳລະເງິນຄ່າງວດເປັນລາຍເດືອນໃຫ້ບໍລິສັດ ໂດຍສາມາດຄອບຄອງ ແລະ ນຳໃຊ້ ລົດຈັກທີ່ເຊົ່າສິນເຊື່ອນັ້ນໄດ້ ເຊິ່ງການບຳລຸງຮັກສາຈະຢູ່ໃນຄວາມຮັບຜິດຊອບຂອງລູກຄ້າ ສ່ວນກຳມະສິດ ລົດຈັກຈະຖືກໂອນໃຫ້ແກ່ລູກຄ້າກໍ່ຕໍ່ເມື່ອລູກຄ້າຊຳລະຄ່າງວດຄົບຕາມສັນຍາແລ້ວ. ໃນກໍລະນີທີ່ລູກຄ້າຜິດ ສັນຍາໂດຍບໍ່ສາມາດຊຳລະເງິນຄ່າງວດ ຫຼື ຄ້າງຈ່າຍຕັ້ງແຕ່ 3 ງວດຕິດຕໍ່ກັນ ສັນຍາອາດຈະຖືກຍົກເລີກກ່ອນ ກຳນົດອາຍຸສັນຍາ ແລະ ລູກຄ້າຕ້ອງສົ່ງລົດຈັກຄືນໃຫ້ບໍລິສັດ.

ການໃຫ້ບໍລິການເຊົ່າສິນເຊື່ອນັ້ນ ບໍລິສັດຈະມີເຈົ້າໜ້າທີ່ວິເຄາະສິນເຊື່ອທີ່ຈະຄອຍໃຫ້ບໍລິການ ແລະ ຕິດຕໍ່ ກັບຮ້ານຕົວແທນຈຳໜ່າຍລົດຈັກທີ່ເປັນຄູ່ຄ້າທາງທຸລະກິດ ກະຈາຍຢູ່ໃນເຂດນະຄອນຫຼວງວຽງຈັນ ກວມເອົາ ທັງຮ້ານຕົວແທນຈຳໜ່າຍລົດຂະໜາດໃຫຍ່ ແລະ ຮ້ານນ້ອຍຫຼາຍກວ່າ 30 ຮ້ານທີ່ມີຄວາມສຳພັນທີ່ດີກັບ ບໍລິສັດ. ທັງນີ້ເມື່ອລູກຄ້າເຂົ້າໄປຮ້ານຕົວແທນຈຳໜ່າຍລົດຈັກ ມີຄວາມຕ້ອງການຊື້ລົດຈັກ ເຈົ້າໜ້າທີ່ວິເຄາະ ສິນເຊື່ອຂອງບໍລິສັດ ຈະເປັນຜູ້ໃຫ້ຂໍ້ມູນການບໍລິການເຊົ່າສິນເຊື່ອແກ່ລູກຄ້າ ໂດຍຈະມີຜູ້ພິຈາລະນາ ແລະ ກວດສອບຄຸນສົມບັດຂອງຜູ້ໃຫ້ສິນເຊື່ອ ແລະ ການດຳເນີນຕາມຂັ້ນຕອນ ເພື່ອອະນຸມັດສິນເຊື່ອແກ່ລູກຄ້າຕໍ່ ໄປ ພ້ອມນີ້ ກໍ່ເພື່ອຕອບສະໜອງຄວາມຕ້ອງການໃຊ້ລົດຈັກຂອງລູກຄ້າຢ່າງທັນໃຈ, ລວມເຖິງການໃຊ້ເວລາ ອະນຸມັດສິນເຊື່ອ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງລູກຄ້າ ປຽບດັ່ງຍົກບໍລິການເຊົ່າສິນເຊື່ອໄປໄວ້ຮ້ານ ຕົວແທນຈຳໜ່າຍລົດຈັກ.

### 6.2.2 ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ)

ບໍລິສັດ ໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ແລ້ວ (ມືສອງ) ຈາກລົດຈັກທີ່ຍຶດມາຈາກລູກຄ້າທີ່ບໍ່ສາມາດຊຳລະເງິນຄ່າງວດຕາມສັນຍາໄດ້ ລວມເຖິງລົດຈັກທີ່ໃຊ້ແລ້ວ ທີ່ຂາຍອອກຈາກຮ້ານຄ້າມືສອງ ແລະ ບຸກຄົນທົ່ວໄປ ເຊິ່ງລັກສະນະ ແລະ ຂັ້ນຕອນການບໍລິການແມ່ນຈະຄ້າຍຄືກັນກັບການບໍລິການເຊົ່າສິນເຊື່ອລົດຈັກໃຫມ່. ການໃຫ້ບໍລິການເຊົ່າສິນເຊື່ອລົດຈັກທີ່ໃຊ້ງານແລ້ວ (ມືສອງ) ຖືເປັນອີກໜຶ່ງຜະລິດຕະພັນ ໃນການຂະຫຍາຍຖານລູກຄ້າຂອງບໍລິສັດໃຫມ່ ເພື່ອຕອບສະໜອງຄວາມຕ້ອງການລົດຈັກມືສອງສະພາບດີໃຫ້ແກ່ຜູ້ບໍລິໂພກໃນຕະຫຼາດ.

### 6.2.3. ບໍລິການເຊົ່າສິນເຊື່ອລົດຈັກຄືນໃຫມ່

ບໍລິສັດມີການບໍລິການ ໃຫ້ສິນເຊື່ອລົດຈັກຄືນໃຫມ່ (Refinance) ໂດຍມີລູກຄ້າຜູ້ທີ່ມີຄວາມຕ້ອງການນຳໃຊ້ເງິນສາມາດນຳລົດຈັກຂອງຕົນ ທີ່ມີສັນຍາເຊົ່າສິນເຊື່ອກັບບໍລິສັດ ຫຼື ມີສັນຍາກັບບໍລິສັດເຊົ່າສິນເຊື່ອອື່ນມາຄ້ຳປະກັນ ເພື່ອທຳການປັບປຸງໂຄງສ້າງໜີ້ຂອງຜູ້ຂໍສິນເຊື່ອ ຫຼື ເອົາລົດຈັກມາຄ້ຳປະກັນການຂໍສິນເຊື່ອເພື່ອຮັບເງິນ ໂດຍຕ້ອງມີການລະບຸຊັດເຈນ ເຖິງວັດຖຸປະສົງຂອງການ Refinance ໃຫ້ຊັດເຈນເຊິ່ງບໍລິສັດຈະທຳການຕີມູນຄ່າລົດຈັກຕາມນະໂຍບາຍຂອງບໍລິສັດ, ການຄິດໄລ່ອັດຕາດອກເບ້ຍ ແລະ ຄ່າທຳນຽມຈະແຕກຕ່າງກັນກັບການໃຫ້ບໍລິການເຊົ່າສິນເຊື່ອ ສ່ວນຂະບວນການຂັ້ນຕອນການດຳເນີນງານຕ່າງໆ ແມ່ນຈະຄືກັນກັບການເຊົ່າສິນເຊື່ອລົດຈັກໃໝ່.

### 6.2.4. ບໍລິການເຊົ່າສິນເຊື່ອຜ່ອນຄຳ

ບໍລິສັດ ຈັດໃຫ້ມີບໍລິການ ສິນເຊື່ອຜ່ອນຄຳ ສຳຫຼັບບຸກຄົນທົ່ວໄປ ເຊິ່ງຂະບວນການໃນການພິຈາລະນາສິນເຊື່ອຄືກັບການຜ່ອນລົດຈັກໃຫ່ມ ເຊິ່ງສິນເຊື່ອຜ່ອນຄຳນີ້ ສ້າງໂອກາດໃນການຂະຫຍາຍທຸລະກິດຈາກຖານລູກຄ້າໃນປັດຈຸບັນ ແລະ ເປັນການເປີດໂອກາດໃຫ້ລູກຄ້າທີ່ຕ້ອງການລົງທຶນ ຫຼື ຕ້ອງການອອມທຶນໃນຮູບແບບຂອງການສະສົມຄຳອີກດ້ວຍ

## 7. ການຄຸ້ມຄອງບໍລິສັດ ແລະ ການບໍລິຫານຈັດການ

### 7.1 ໂຄງຮ່າງການຈັດຕັ້ງຂອງບໍລິສັດ

# ໂຄງຮ່າງການຈັດຕັ້ງຂອງບໍລິສັດ



### 7.2 ສະພາບໍລິຫານ

### 7.2.1 ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ

| ລຳດັບ | ຮູບຖ່າຍ | ສະພາບໍລິຫານ (Board of Directors) | ສັນຊາດ | ຕຳແໜ່ງ |
|---|---|---|---|---|
| 1 |  | ທ່ານ ທີຣະ ຊຸຕິວະລາພອນ | ໄທ | ປະທານ ສະພາບໍລິຫານ |
| 2 |  | ທ່ານ ວິຊຽນ ລັກນາທິນ | ໄທ | ຮອງປະທານ ສະພາບໍລິຫານ |
| 3 |  | ທ່ານ ມານົບ ຕຣີລິດວິໄລ | ໄທ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ (Executive Director) |
| 4 |  | ທ່ານ ຊາຄຣິດ ນັກສອນ<br>(ລາອອກມີຜົນ ວັນທີ 10 ກັນຍາ 2023) | ໄທ | ສະມາຊິກສະພາບໍລິຫານ |
| 5 |  | ທ່ານ ໄວຣຸ່ງ ມີນາກຸນ | ໄທ | ສະມາຊິກສະພາບໍລິຫານ |
| 6 |  | ທ່ານ ໂກວິດ ເກີດສິລິລັກ | ໄທ | ສະມາຊິກສະພາບໍລິຫານ |
| 7 |  | ທ່ານ ວັນຄຳ ວໍລະວົງ<br>(ສິ້ນສຸດໜ້າທີ່ ເນື່ອງຈາກເສຍຊີວິດ ມີຜົນ ວັນທີ 25 ກຸມພາ 2024) | ລາວ | ສະມາຊິກສະພາບໍລິຫານ (ອິດສະຫຼະ) |
| 8 |  | ທ່ານ ທີຣະເມດ ວຸດທິພັດພິບູນ | ໄທ | ສະມາຊິກສະພາບໍລິຫານ (ອິດສະຫຼະ) |
| 9 |  | ທ່ານ ວິນຍູ ຈີລະປະພາການ | ໄທ | ສະມາຊິກສະພາບໍລິຫານ (ອິດສະຫຼະ) |

ສະມາຊິກສະພາບໍລິຫານຊຸດປັດຈຸບັນ ໄດ້ຮັບການແຕ່ງຕັ້ງຕາມມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເມື່ອວັນທີ 26 ພຶດສະພາ 2022

| ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ<br>**CV of Board of Directors** | |
|---|---|
| 1. ທ່ານ ທີຣະ ຊຸຕິວະລາພອນ<br>MR. Teera CHUTIVARAPON | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 1 NOV 1995<br>ສັນຊາດ/Nationality : ໄທ/ Thai<br>ພາສາ/Language : ໄທອັງກິດ ,ລາວ ,/Thai, Lao and English<br>ຕໍາແໜ່ງ/Position : ປະທານ ສະພາບໍລິຫານ MHTL/Chairman<br>ວັນທີຮັບຕໍາແໜ່ງ/Date of appointed : 26 May 2022<br>**ປະຫວັດການສຶກສາ/Education:**<br>ປີ 2017 : University of Queensland, Bachelor of Arts (Psychology)<br>ປີ 2018 : Chulalongkorn University, Faculty of Psychology<br>**ປະຫວັດການເຮັດວຽກ/Experience:**<br>ປີ 2022 - Present : Director Mahathuen Leasing Public Company.<br>ປີ 2022 - Present : Chief Executive Officer Mahathuen Holding Co., LTD.<br>ປີ 2021 - Present : Chief Executive Officer Alpha Division PLC.<br>ປີ 2021 - Present : Chief Executive Officer Alpha Biotech Co., LTD.<br>ປີ 2019 - 2020 : Deputy Chief Executive Officer Chief Marketing Officer V Sukhumvit 36 Development Co., LTD.<br>ປີ 2018 - 2019 : Deputy Chief Executive Officer Chief Marketing Officer Sukhumvit 43 Condominium Co., LTD. |
| 2. ທ່ານ ວິຊຽນ ລັກນາທິນ<br>MR. Wichien LUKNATIN | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 5 Aug 1970<br>ສັນຊາດ/Nationality : ໄທ/ Thai<br>ພາສາ/Language : ໄທອັງກິດ ,/Thai and English<br>ຕໍາແໜ່ງ/Position : ຮອງປະທານ ສະພາບໍລິຫານ MHTL/ Vice Chairman<br>ວັນທີຮັບຕໍາແໜ່ງ/Date of appointed : 26 May 2022<br>**ປະຫວັດການສຶກສາ/Education:**<br>Master of Applied Finance, University of Western Sydney, Australia<br>**ປະຫວັດການເຮັດວຽກ/Experience**<br>ປີ 2020 – Present : Deputy Chief Executive Officer Alpha Division PLC.<br>ປີ 2020 – Present : Deputy Chief Executive Officer Alpha Biotech Co., LTD.<br>ປີ 2017 – 2021 : Business Development Director Single Point Parts (Thailand) Co., LTD. |

| | |
|---|---|
| 3. ທ່ານ ມານົບ ຕຣີລິດວິໄລ<br>Mr. Manop Tririthvilay | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/date of birth : 12 April1965<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ໄທ,ລາວອັງກິດ ,/ Thai, Lao and English<br>ຕຳແໜ່ງ/Position : ຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/CEO of MHTL<br>ວັນທີຮັບຕຳແໜ່ງ/Date of appointed: 1st time - 10th August2017<br>2nd time - 29th May20 20<br>3rd time - 26 th May2022<br>**ປະຫວັດການສຶກສາ:**<br>ປີ 1987 : Bachelor of Business Administration (B.B.A) ,Bangkok, Thailand Major Information System, Institute of Technology and Vocational Education<br>ປີ 1993: Master degree in Applied Statistics, Major Computer Science , National Institute of Development Administration (NIDA)Bangkok, Thailand<br>**ປະຫວັດການເຮັດວຽກ/ Experience**<br>ປີ 2015 - ປະຈຸບັນ : ຜູ້ອຳນວຍການໃຫຍ່ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ , CEO, MHTL<br>ປີ 2008- 2015 : ຜູ້ອຳນວຍການຝ່າຍປະຕິບັດການບໍລິສັດ ຊຊກິ ເຊົ່າສິນເຊື່ອ , ອິນເຕີເນັດເຊິນເນວ (ໄທແລນ) ຈຳກັດປະເທດໄທ ,<br>ປີ 1995- 2008: ຮອງຜູ້ອຳນວຍການປະເທດໄທ ,ບໍລິສັດ ບີທີ ເວີລີສ໌ ຈຳກັດ , Executive Vice President BT Worldlease Co., Ltd.<br>COO, Suzuki Leasing International (Thailand) Co., Ltd.<br>ປີ 1991- 1995: ຜູ້ຊ່ວຍຜູ້ຈັດການ ບໍລິສັດ ທະນະພົນ ການເງິນ ແລະ ,ຫຼັກຊັບ ມະຫາຊົນ ຈຳກັດປະເທດໄທ , Assistant section manager, Thanapon Finance and Securities PCL.<br>ປີ 1989- 1991: ວິຊາການຜູ້ກວດສອບພາຍໃນທະນາຄານແຫ່ງປະເທດໄທ , Internal Audit, Bank of Thailand<br>ປີ 1985-1989 : ວິຊາການຜູ້ກວດສອບພາຍໃນທະນາຄານກະສິກອນ , ມະຫາຊົນ ຈຳ ກັດປະເທດ , ໄທ/Internal Audit, Kasikorn Bank Public Co.,Ltd |
| 4. ທ່ານ ຊາຄຣິດ ນັກສອນ<br>Mr. Chakrit Naksorn | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 26November 1961<br>ສັນຊາດ/Nationality : ໄທ<br>ພາສາ/Language : ໄທອັງກິດ ,ລາວ ,/Thai, Lao and English<br>ຕຳແໜ່ງ/Position : ສະມາຊິກສະພາບໍລິຫານ MHTL/ Member of Board of Directors<br>ວັນທີຮັບຕຳແໜ່ງ/Date of appointed : 10August 2017 |

| | |
|---|---|
| | **ປະຫວັດການສຶກສາ/Education:**<br>ປີ 1987: Bachelor's degree B.S. Industrial Engineering ,Manila University, Philippines<br>**ປະຫວັດການເຮັດວຽກ/Experience:**<br>ປີ 1995- ເຈົ້າຂອງທຸລະກິດ ,ບໍລິສັດ ລັດດາວ ຄອມມູນີ ເຄຊັ່ນ ຈຳກັດ ,ເປັນທີ່ປຶກສາ : 1998<br>ປີ 2013-ປະຈຸບັນ : ເປັນທີ່ປຶກສາຜູ້ສ້າງຕັ້ງ ,ບໍລິສັດ ມະຫະທຸນ ໂຮນດິ້ງ ຈຳກັດ , Consultant, Mahathun Holding Co., Ltd.<br>ປີ 2017-ປະຈຸບັນ : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Chairman ,MHTL |
| 5. ທ່ານ ໄວຣຸ່ງ ມີນາກຸນ<br>Mr. Wairung Minakul | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/Date of birth : 1973 ກັນຍາ 30ເພດ / Sex: ຊາຍ<br>ສັນຊາດ/Nationality : ໄທ<br>ພາສາ/:Language : ໄທອັງກິດ ,ລາວ ,/Thai, Lao and English<br>ຕຳແໜ່ງ/Position : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL<br>ວັນທີຮັບຕຳແໜ່ງ/Date of appointed : 26 May2022<br>**ປະຫວັດການສຶກສາ/Education:**<br>ປີ 2002- 2004: The National Institute of Development Administration (NIDA), Bangkok: Faculty Business Administration Major in Marketing, MBA<br>ປີ 1991- 1995: Ramkhamhaeng University, BangkokBachelor's Degree of Science in Chemistry,<br>ປີ 1985- 1991: Suankularb Vitayalai Nonthburi School, Nonthburi Major Science: Mathematics<br>**ປະຫວັດການເຮັດວຽກ/Experience**<br>ປີ 1995 - 2000: Production engineer :Thai Petrochemical Industry (PLC) Ltd (Rayong Plant)<br>ປີ 2000 - 2004: Planning & Logistics Manager Alpla (Thailand) Ltd<br>ປີ 2004 - 2005: Warehouse & Distribution Manager (Interim as Country supply chain Head): Ciba Specialty Chemical (Thailand) Ltd<br>ປີ 2005 - 2017: (American Standard B&K Thailand PCL) Asia Demand Planning Director :LIXIL (Thailand) PCL<br>ປີ 2017- ປະຈຸບັນ: Supply Chain Director :Hafele (Thailand) Company Limited<br>ປີ 2022- ປະຈຸບັນ: ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ Member of Board of Directors, MHTL |

| | |
|---|---|
| 6. ທ່ານ ໂກວິດ ເກີດສິລິລັກ<br>Mr Kovit KERDSIRIRAK | **ຊີວະປະຫວັດຫຍໍ້/CV**<br>ວັນ ເດືອນ ປີເກີດ/ Date of birth : 1938 ກຸມພາ 20<br>ສັນຊາດ/ Nationality : ໄທ/Thai<br>ພາສາ/ Language : ໄທອັງກິດ ,/Thai, English<br>ຕໍາແໜ່ງ/ Position : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors, MHTL<br>ວັນທີຮັບຕໍາແໜ່ງ/ Date of appointed : 26 ພຶດສະພາ 2022<br>**ປະຫວັດການສຶກສາ/Education:**<br>- ນິຕິສາດ ມະຫາວິທະຍາໄລ ທໍາມະຊາດ/ Bachelor of Laws Thammasat University<br>- ເນຕິບັນດິດ ສໍານັກງານຝຶກອົບຮົມ ກົດໝາຍເນຕິບັນດິດສາດ/<br>Barrister-at-Law, Barrister-at-Law Training Office<br>**ປະຫວັດການເຮັດວຽກ/Experience**<br>- 2022- ປະຈຸບັນ : ສະມາຊິກສະພາບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/Member of Board of Directors, MHTL<br>- 2020 - ປະຈຸບັນ : ກໍາມະການ ບມຈ ອັນຟ່າ ດີວີຊັ່ນ/ Director Alpha Division PLC<br>– 2000 – 2009 : ໄອຍະການສໍານັກງານໄອຍະການສູງສຸດ/<br>Senior Prosecutor Attorney General's Office |
| 7. ທ່ານ ວິນຍູ ຈິລະປະພາການ<br>Mr. Winyou Jeeraprapakan | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth : 12 Jan 1977<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ລາວ, ອັງກິດ, ຣັດເຊຍ/ Lao, English, Russian<br>ຕໍາແໜ່ງ/Position: ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ/Member of Board of Directors (Independent)<br>ວັນທີແຕ່ງຕັ້ງ/Date of Appointed: 29 May 2020<br>**ປະຫວັດການສຶກສາ/Education:**<br>• Master degree – Economics (NIDA)<br>• Bachelor degree – Science (Khonkaen University)<br>**ປະຫວັດການເຮັດວຽກ/Exprerince:**<br>• 2018– Present : Vice President, Tanakit Infinity Plus Co., Ltd. Asset and Debt management company<br>• 2003– Present : Managing Director, Ubonvibool Part., Ltd. The Authorized Distribution of Maxxis International Co., Ltd.<br>• 2001– Present : Managing Director, Car Clinic Part., Ltd.<br>ປີ 2020-ປະຈຸບັນ : ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors (Independent), MHTL |

| | |
|---|---|
| 8. ທ່ານ ວັນຄຳ ວໍລະວົງ<br>Mr. Vanhkham VORAVONG | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth : 03 April19 60<br>ສັນຊາດ/Nationality : ລາວ/Lao<br>ພາສາ/Language : ລາວອັງກິດ ,/ Lao, English<br>ຕຳແໜ່ງ/Position: ສະມາຊິກສະພາບໍລິຫານ(ອິດສະຫຼະ) ແລະ ປະທານຄະນະກຳມະການກວດສອບ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of the Board of Directors (Independent) and Chairman of Audit Committee<br>ວັນທີແຕ່ງຕັ້ງ/Date of Appointed: ພຶດສະພາ 26 2022<br>**ປະຫວັດການສຶກສາ/ Education:**<br>ປີ 2007 - 2009 : ປຣິນຍາໂທ ການບໍລິຫານການເງິນສາກົນ.(ໂຄງການລາວ-ຈີນ) ມຊ.<br>ປີ 1996 - 2000 : ປຣິນຍາຕີ ພາສາອັງກິດ. ມະຫາວິທະຍາໄລແຫ່ງຊາດ ສປປລາວ.<br>ປີ 1982 - 1985 : ຊັ້ນກາງ ການເງິນ-ທະນາຄານ ຮຣ ການເງິນ-ທະນາຄານຊັ້ນກາງທ່າງ່ອນ ສປປລາວ.<br>**ປະຫວັດການເຮັດວຽກ/Experience:**<br>ປີ 2012 - 2014 : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ<br>ປີ 2015 - 2019 : ຜູ້ອຳນວນການ ຕະຫຼາດຫຼັກຊັບລາວ<br>ປີ 2020 - ປະຈຸບັນ : ຜູ້ຊ່ວຍຄະນະ +ຜູ້ວ່າການ<br>ປີ 2022 - ປະຈຸບັນ : ສະມາຊິກສະພາບໍລິຫານ(ອິດສະຫຼະ) ແລະ ປະທານຄະນະກຳມະການກວດສອບ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ / Member of the Board of Directors (Independent) and Chairman of Audit Committee |
| 9. ທ່ານ ທີລະເມດ ວຸດທິພັດພິບູນ<br>Mr. Theeramate Vuttipadhpibul | **ຊີວະປະຫວັດຫຍໍ້/CV**<br>ວັນ,ເດືອນ,ປີເກີດ/Date of birth: 20 September 1967<br>ສັນຊາດ/Nationality : ໄທ/Thai<br>ພາສາ/Language : ໄທອັງກິດ ,/ Thai, English<br>ຕຳແໜ່ງ/Position : ສະມາຊິກສະພາບໍລິຫານ(ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ /Member of Board of Directors (Independent)<br>ວັນທີແຕ່ງຕັ້ງ/Date of Appointed: 10 August2017<br><br>**ປະຫວັດການສຶກສາ/Education:**<br>ປີ 1989: ປະລິນຍາຕຣີ ບັນຊີມະຫາວິທະຍາໄລ , ຈຸລາລົງກອນ<br>Bachelor's degree of Accounting, Chulalongkorn University<br>ປີ 1997: ປະລິນຍາໂທ ການບໍລິຫານທຸລະກິດ ,ມະຫາວິທະຍາໄລທຳມະສາດ<br>Master's degree of business administration, Thammasat University<br>**ປະຫວັດການເຮັດວຽກ/Experience:**<br>ປີ 1989 -19 92 : Senior Auditor, SCG-Na Co.,LTD (Anthur Anderson Group) |

| | |
|---|---|
| | ປີ 1992 – 1994 : Chief Accountant, Siam Syntech Construction PCL<br>ປີ 1994 –199 7 : Manager, UTV Cable Network PCL ( Television )<br>ປີ 1997 – 1998 : Senior Manager, Cineplex Co.,Ltd<br>ປີ 1998 – 2003: Financial Controller and Office Manager, Asia Pacific Potash Co.,Ltd<br>ປີ 2003 – 2007: Manager, Boots Retail Thailand Co.,Ltd<br>ປີ 2007 – 2012 : Senior Manager, California WOW Xperience PCL(CAWOW)<br>ປີ 2013 – 2014 : Senior Manager. WE Fitness Co.,Ltd (Related Company of Major Group PCL)<br>ປີ 2014 – 2015 : Head of Accounting and Finance. Ticon Management Co., Ltd.<br>ປີ 2015 –201 5 : CFO, Kriz Co., Ltd. (Former subsidiary of AIT PCL)<br>ປີ 2015- ປະຈຸບັນ: Executive Vice President Business ,Advance Information Technology PCL<br>ປີ 2017-ປະຈຸບັນ : ສະມາຊິກສະພາບໍລິຫານ (ອິດສະຫຼະ) ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ<br>Member of Board of Directors (Independent), MHTL |

**ກອງປະຊຸມສະພາບໍລິຫານໃນປີທີ່ຜ່ານມາ**

ຜ່ານການດຳເນີນງານ ໃນປີ 2023 ສະພາບໍລິຫານ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 7 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 24 ມັງກອນ 2023
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 21 ກຸມພາ 2023
- ກອງປະຊຸມ ຄັ້ງທີ 3 ເມື່ອວັນທີ 13 ມີນາ 2023
- ກອງປະຊຸມ ຄັ້ງທີ 4 ເມື່ອວັນທີ 08 ສິງຫາ 2023
- ກອງປະຊຸມ ຄັ້ງທີ 5 ເມື່ອວັນທີ 13 ກັນຍາ 2023
- ກອງປະຊຸມ ຄັ້ງທີ 6 ເມື່ອວັນທີ 19 ຕຸລາ 2023
- ກອງປະຊຸມ ຄັ້ງທີ 7 ເມື່ອວັນທີ 11 ພະຈິກ 2023

**7.3. ຄະນະກຳມະການຂອງສະພາບໍລິຫານ ປະກອບດ້ວຍ**

- ຄະນະກຳມະການກວດສອບ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ

- ຄະນະກຳມະການຄັດເລືອກ
- ຄະນະກຳມະການກຳນົດຄ່າຕອບແທນ
- ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

### 7.3.1. ຄະນະກຳມະການກວດສອບ

| ລ/ດ | ຄະນະກຳມະການກວດສອບ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ວັນຄຳ ວໍລະວົງ (ສິ້ນສຸດໜ້າທີ່ ເນື່ອງຈາກເສຍຊີວິດ ມີຜົນ ວັນທີ 25 ກຸມພາ 2024) | ລາວ | ປະທານ |
| 3 | ທ່ານ ທີຣະເມດ ວຸດທິພັດພິບູນ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |
| 4 | ທ່ານ ວິນຍູ ຈິລະປະພາການ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2023 ຄະນະກຳມະການກວດສອບ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 4 ຄັ້ງ ດັ່ງນີ້:

- ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 17 ກຸມພາ 2023
- ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 03 ພຶດສະພາ 2023
- ກອງປະຊຸມ ຄັ້ງທີ 3 ເມື່ອວັນທີ 03 ສິງຫາ 2023
- ກອງປະຊຸມ ຄັ້ງທີ 4 ເມື່ອວັນທີ 02 ພະຈິກ 2023

### 7.3.2 ຄະນະມະການຄຸ້ມຄອງຄວາມຄວາມສ່ຽງ

| ລ/ດ | ຄະນະກຳມະການຄຸ້ມຄອງຄວາມສ່ຽງ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ທີຣະ ຊຸຕິວະລາພອນ | ໄທ | ປະທານ |
| 2 | ທ່ານ ວິຊຽນ ລັກນາທິນ | ໄທ | ຄະນະກຳມະການ |
| 4 | ທ່ານ ວິນຍູ ຈິລະປະພາການ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2023 ຄະນະກຳມະການກວດສອບ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 3 ຄັ້ງ ດັ່ງນີ້:

ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 16 ກຸມພາ 2023

### 7.3.3. ຄະນະກມະການຄັດເລືອກ

| ລ/ດ | ຄະນະກຳມະການຄັດເລືອກ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ທີຣະ ຊຸຕິວະລາພອນ | ໄທ | ປະທານ |
| 2 | ທ່ານ ວິຊຽນ ລັກນາທິນ | ໄທ | ຄະນະກຳມະການ |
| 3 | ທ່ານ ທີຣະເມດ ວຸດທິພັດພິບູນ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2023 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 1 ຄັ້ງ ດັ່ງນີ້:

ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 10 ພະຈິກ 2023.

### 7.3.4. ຄະນະກຳມະການກຳນົດຄ່າຕອບແທນ

| ລ/ດ | ຄະນະກຳມະການກຳນົດຄ່າຕອບແທນ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ທີຣະ ຊຸຕິວະລາພອນ | ໄທ | ປະທານ |
| 2 | ທ່ານ ວິຊຽນ ລັກນາທິນ | ໄທ | ຄະນະກຳມະການ |
| 3 | ທ່ານ ວິນຍູ ຈິລະປະພາການ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2023 ຄະນະກຳມະການກຳນົດຄ່າຕອບແທນ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ  11 ມັງກອນ 2023

ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 16 ກຸມພາ 2023

### 7.3.5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

| ລ/ດ | ຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ | ສັນຊາດ | ຕຳແໜ່ງ |
|---|---|---|---|
| 1 | ທ່ານ ໂກວິດ ເກີດສີລິລັກ | ໄທ | ປະທານ |
| 2 | ທ່ານ ໄວຣຸ່ງ ມີນາກຸນ | ໄທ | ຄະນະກຳມະການ |
| 3 | ທ່ານ ທີຣະເມດ ວຸດທິພັດພິບູນ | ໄທ | ຄະນະກຳມະການ/ສະມາຊິກອິດສະຫຼະ |

ຜ່ານການດຳເນີນງານ ໃນປີ 2023 ຄະນະກຳມະການກຳນົດຄ່າຕອບແທນ ໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ ຈຳນວນ 2 ຄັ້ງ ດັ່ງນີ້:

ກອງປະຊຸມ ຄັ້ງທີ 1 ເມື່ອວັນທີ 17 ກຸມພາ 2023

ກອງປະຊຸມ ຄັ້ງທີ 2 ເມື່ອວັນທີ 03 ສິງຫາ 2023

**☐ ລາຍງານການຖືຮຸ້ນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ທັງທາງກົງ ແລະ ທາງອ້ອມມີດັ່ງນີ້:**

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ຈຳນວນຮຸ້ນທີ່ຖື | ອັດຕາ |
|---|---|---|---|---|
| 1 | ທ່ານ ທີຣະ ຊຸຕິວະລາພອນ | ປະທານສະພາບໍລິຫານ | 0 | 0,00000% |

| | | | | |
|---|---|---|---|---|
| 2 | ທ່ານ ວິຊຽນ ລັກນາທິນ | ຮອງປະທານສະພາ ບໍລິຫານ | 0 | 0,00000% |
| 3 | ທ່ານ ມານົບ ຕຣີລິດວິໄລ | ສະມາຊິກສະພາ ບໍລິຫານ | 2,964,080 | 0,74102% |
| 4 | ທ່ານ ຊາຄຣິດ ນັກສອນ | ສະມາຊິກສະພາ ບໍລິຫານ | 80 | 0,00002% |
| 5 | ທ່ານ ໄວຮຸ່ງ ມີນາກຸນ | ສະມາຊິກສະພາ ບໍລິຫານ | 0 | 0,00000% |
| 6 | ທ່ານ ໂກວິດ ເກີດສິລິລັກ | ສະມາຊິກສະພາ ບໍລິຫານ | 0 | 0,00000% |
| 7 | ທ່ານ ວັນຄຳ ວໍລະວົງ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 0 | 0,00000% |
| 8 | ທ່ານ ທີຣະເມດ ວຸດທິພັດ ພິບູນ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 625,000 | 0,15625% |
| 9 | ທ່ານ ວິນຍູ ຈິລະປະພາການ | ສະມາຊິກສະພາ ບໍລິຫານ (ອິດສະຫຼະ) | 0 | 0,00000% |

ການຖືຮຸ້ນ ທາງອ້ອມຕາມສາຍຜົວພັນ ຜົວ, ເມຍ ຫຼື ລູກ ຂອງສະມາຊິກສະພາບໍລິຫານປະ ກອບມີ:

1. ທ່ານ ມານົບ ຕຣີລິດວິໄລ ສະມາຊິກສະພາບໍລິຫານ ການຖືຮຸ້ນທາງອ້ອມຕາມສາຍຜົວພັນ ຜົວ, ເມຍ ຫຼື ລູກ ມີ 1,585,000 ຮຸ້ນ

### 7.4. ຄ່າຕອບແທນຂອງສະມາຊິກສະພາບໍລິຫານ

1. ໃຫ້ໃຫ້ຄ່າຕອບແທນແກ່ຜູ້ອຳນວຍການທັງໝົດ ເພື່ອກຳນົດທິດທາງ ແລະ ນະໂຍບາຍຂອງບໍລິສັດ ແລະ ຕິດຕາມການກວດກາການປະຕິບັດງານຂອງບໍລິສັດດັ່ງຕໍ່ໄປນີ້
   a. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນປະທານສະພາບໍລິຫານອັດຕາ 11.250.000 ກີບຕໍ່ເດືອນຕໍ່ທ່ານ
   b. ຜູ້ອຳນວຍການທີ່ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານອັດຕາ 6.250.000 ກີບຕໍ່ເດືອນຕໍ່ທ່ານ
2. ຄ່າເບ້ຍປະຊຸມ ເພື່ອເປັນຄ່າຕອບແທນການເດີນທາງເຂົ້າມາຮ່ວມປະຊຸມແຕ່ລະຄັ້ງ
   a. ສຳລັບການປະຊຸມສະພາບໍລິຫານເປັນດັ່ງນີ້:
      I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 2.500.000 ກີບຕໍ່ຄັ້ງຕໍ່ທ່ານ
      II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ຄັ້ງຕໍ່ທ່ານ

b. ສຳລັບການປະຊຸມຄະນະກຳມະການຊຸດຍ່ອຍທັງ 5 ຊຸດ

I. ຜູ້ເຮັດໜ້າທີ່ເປັນປະທານສະພາບໍລິຫານ ອັດຕາ 1.500.000 ກີບຕໍ່ຄັ້ງຕໍ່ທ່ານ

II. ຜູ້ເຮັດໜ້າທີ່ເປັນສະມາຊິກສະພາບໍລິຫານອັດຕາ 1.000.000 ກີບຕໍ່ຄັ້ງຕໍ່ທ່ານ

3. ຄ່າເບ້ຍປະຈຳປີ ສຳລັບສະມາຊິກສະພາບໍລິຫານທຸກທ່ານ ກຳນົດນະໂຍບາຍຂອງບໍລິສັດ ແລະ ຕິດຕາມການຄຸ້ມຄອງດຳເນີນງານຂອງບໍລິສັດ, ສະນັ້ນເງິນໂບນັດປະຈຳປີຂອງສະພາບໍລິຫານຄວນກຳນົດໃຫ້ກ່ຽວຂ້ອງກັບການຄາດຄະເນກຳໄລສຸດທິ ປະຈຳປີ 2023 ເຊິ່ງເທົ່າກັບ 3 ສ່ວນຮ້ອຍ ຈາກກຳໄລສຸດທິຫຼັງການຈ່າຍພາສີ ເຊິ່ງພິຈາລະນາເພີ່ມຂຶ້ນ ຫຼື ຫຼຸດລົງຕາມຜົນງານຕົວຈິງ

ເຊິ່ງໃນປີທີ່ຜ່ານມາບໍລິສັດໄດ້ຈ່າຍຄ່າຕອບແທນຂອງສະມາຊິກສະພາບໍລິຫານລວມທັງໝົດຈຳນວນ 909.134.000 ກີບ

ຄ່າຕອບແທນທີ່ໄດ້ກ່າວມາຂ້າງເທິງນີ້ບໍ່ໄດ້ລວມເອົາເງິນເດືອນ, ເງິນບຳນານ ແລະ ຜົນປະໂຫຍດອື່ນໆຂອງຜູ້ອຳນວຍການບໍລິຫານ, ເຊິ່ງປະຕິບັດໜ້າທີ່ໃນການເຮັດວຽກປະຈຳວັນ.

## 8. ຜົນການດຳເນີນທຸລະກິດ ແລະ ຜົນການດຳເນີນງານ ປະຈຳປີ 2023

### 8.1 ຜົນການດຳເນີນການດ້ານການຕະຫຼາດ

ໃນ 2023 ແລະ 2022, ບໍລິສັດມີການອະນຸມັດສິນເຊື່ອໃໝ່ ຈຳນວນ 4.247 ສັນຍາ ແລະ 4.718 ຕາມລຳດັບ ຫຼຸດລົງ 471 ສັນຍາ ຫຼື ຫຼຸດລົງ 9.9 ສ່ວນຮ້ອຍ, ສ່ວນຈຳນວນໃຫ້ເງິນສິນເຊື່ອ ມີຈຳນວນ 66.813 ລ້ານກີບ ແລະ 81.228 ລ້ານກີບ ຫຼຸດລົງ 14.415 ລ້ານກີບ ຫຼື ຫຼຸດລົງ 17.7 ສ່ວນຮ້ອຍ.

ຕາຕະລາງ: ການອະນຸມັດສິນເຊື່ອໃໝ່

| ປຽບທຽບການອະນຸມັດສິນເຊື່ອລົດຈັກຂອງບໍລິສັດ ປີ 2023 ແລະ 2022 | | | | |
|---|---|---|---|---|
| ລາຍການ | ປີ 2023 | ປີ 2022 | ເພີ່ມຂຶ້ນ | ອັດຕາສ່ວນຮ້ອຍ |
| ຈຳນວນສັນຍາ (ຄັນ) | 4.247 | 4.718 | -471 | -9.9 |
| ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ) | 66.813 | 81.228 | -14.415 | -17.7 |

### 8.2 ລາຍຮັບ

ໃນປີ 2023 ແລະ ປີ 2022, ບໍລິສັດ ໄດ້ມີລາຍຮັບລວມທັງໝົດ ຈຳນວນ 43.642,1 ລ້ານກີບ ແລະ 33.725,4 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ 9.916,7 ສ່ວນຮ້ອຍ ເມື່ອທຽບໃສ່ປີທີ່ຜ່ານມາ ໃນຈຳນວນມີລາຍຮັບດອກເບ້ຍ ຈຳນວນ 36.041,9 ລ້ານກີບ ແລະ 31.447,2 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ 4.594,7 ລ້ານກີບ ຫຼື ເພີ່ມຂຶ້ນ 14,6 ສ່ວນຮ້ອຍ ເມື່ອທຽບກັບປີທີ່ຜ່ານມາ.

ຕາຕະລາງ : ລາຍຮັບ

| ລາຍຮັບ | 2023 | | 2022 | | ປ່ຽນແປງ | |
|---|---|---|---|---|---|---|
| | ກີບ | % | ກີບ | % | ກີບ | % |
| ດອກເບ້ຍ | 36.041,9 | 82,6 | 31.447,2 | 93,2 | +4.594,7 | +14,6 |

| | | | | | | |
|---|---|---|---|---|---|---|
| ລາຍຮັບ ອື່ນ | 7.600,2 | 17,4 | 2.278,2 | 6,8 | +5.322,0 | +233,6 |
| **ລວມ ລາຍຮັບ** | **43.642,1** | **100,0** | **33.725,4** | **100,0** | **+9.916,7** | **+29,4** |

### 8.3 ລາຍຈ່າຍ

ໃນປີ 2023 ແລະ 2022, ບໍລິສັດໄດ້ມີລາຍຈ່າຍລວມທັງໝົດລວມທັງຄ່າໃຊ້ຈ່າຍທາງດ້ານການເງິນ ຈຳນວນ 33.568,3 ລ້ານກີບ ແລະ 30.035,9 ລ້ານກີບ ຕາມລຳດັບ. ໃນນີ້ ລາຍຈ່າຍລວມເພີ່ມຂຶ້ນ 3.532,4 ລ້ານກີບ ຫຼື ເພີ່ມຂຶ້ນ 11,8 ສ່ວນຮ້ອຍ ເມື່ອທຽບກັບປີທີ່ຜ່ານມາ ຊຶ່ງລາຍຈ່າຍທີ່ເພີ່ມສູງຫຼາຍ ຈາກລາຍຈ່າຍການເງິນ ປີ 2023 ຈຳນວນ 7.594.0 ລ້ານກີບ ທຽບກັບປີ 2022 ຈຳນວນ 3.583.0 ລ້ານກີບ ຫຼື ເພີ່ມຂຶ້ນ 4.011.0 ລ້ານກີບ ຫຼືເພີ່ມ 111.9 ສ່ວນຮ້ອຍ ເນື່ອງຈາກບໍລິສັດກູ້ຢືມເງິນມາເພື່ອກຽມຂະຫຍາຍທຸລະກິດໃນອະນາຄົດ.

ຕາຕະລາງ: ລາຍຈ່າຍ

| ລາຍຈ່າຍ | 31 ທັນວາ 2023 | | 31 ທັນວາ 2022 | | ປ່ຽນແປງ | |
|---|---|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % | ລ້ານກີບ | % |
| ລາຍຈ່າຍໃນການບໍລິຫານ | 20.884,3 | 62,2 | 15.234,3 | 50,7 | +5.650,0 | +37,1 |
| ໜີ້ສິ່ງໃສຈະສູນ | 1.942,5 | 5,8 | 1.533,5 | 5,1 | +409,0 | +26,7 |
| ຂາດທຶນຈາກອັດຕາແລກປ່ຽນ | 3.147,5 | 9,4 | 9.685,1 | 32,3 | -6.537,6 | -67,5 |
| ລາຍຈ່າຍການເງິນ | 7.594,0 | 22,6 | 3.583,0 | 11,9 | +4.011.0 | + 111,9 |
| **ລວມ ລາຍຈ່າຍ** | **33.568,3** | **100.0** | **30.035,9** | **100,0** | **+3.532,4** | **+ 11,8** |

ໃນປີ 2023 ແລະ 2022, ບໍລິສັດມີໂຄງສ້າງລາຍຈ່າຍລວມທີ່ປະກອບດ້ວຍ: ລາຍຈ່າຍບໍລິຫານ ເທົ່າກັບ 20.884,3 ລ້ານກີບ ຊຶ່ງເທົ່າກັບ 62,2 ສ່ວນຮ້ອຍ, ແລະ 15.234,3 ລ້ານກີບ ຊຶ່ງເທົ່າກັບ 50,7 ສ່ວນຮ້ອຍ ໜີ້ສິ່ງໃສຈະສູນ ເທົ່າກັບ 1.942,5 ລ້ານກີບ ຫຼື ເທົ່າກັບ 5,8 ສ່ວນຮ້ອຍ 1.533,5 ລ້ານກີບ ຫຼື ເທົ່າກັບ 5,1 ສ່ວນຮ້ອຍ, ຂາດທຶນຈາກອັດຕາແລກປ່ຽນ 3.147,5 ລ້ານກີບ ເທົ່າກັບ 9,4 ສ່ວນຮ້ອຍ 9.685,1 ລ້ານກີບ ເທົ່າກັບ 32,3 ສ່ວນຮ້ອຍ ແລະ ລາຍຈ່າຍການເງິນ ເທົ່າກັບ 7.594,0 ລ້ານກີບ ຫຼື ເທົ່າກັບ 22,6 ສ່ວນຮ້ອຍ. ແລະ 3.583,0 ລ້ານກີບ ຫຼື ເທົ່າກັບ 11,9 ສ່ວນຮ້ອຍ.

ຄ່າໃຊ້ຈ່າຍໃນການບໍລິຫານ ໄດ້ລວມຄ່າໃຊ້ຈ່າຍກ່ຽວກັບພະນັກງານ, ຜົນຕອບແທນຈາກການບໍລິຫານ, ເຄື່ອງໃຊ້ໃນຫ້ອງການ, ຄ່າການຕະຫຼາດ, ຂາດທຶນຈາກການຂາຍຄືນຊັບສິນຍຶດຄືນ, ຄ່າເງິນລາງວັນ, ຄ່າເຊື່ອມລາຄາ ແລະ ຄ່າໃຊ້

ຈ່າຍອື່ນໆ ຊຶ່ງໃນປີ 2023 ຄ່າໃຊ້ຈ່າຍລວມເພີ່ມຂຶ້ນ 11.8 ສ່ວນຮ້ອຍ ໃນຂະນະທີ່ລາຍຮັບລວມເພີ່ມຂຶ້ນ 29.4 ສ່ວນຮ້ອຍ ຊຶ່ງສະແດງໃຫ້ເຫັນວ່າບໍລິສັດມີຜົນດຳເນີນການທີ່ມີປະສິດທິພາບສູງຂຶ້ນ.

ໜີ້ສົງໃສຈະສູນໃນປີ 2023 ຈຳນວນ 1.942,5 ລ້ານກີບ ຫຼືເທົ່າກັບ 5.8 ສ່ວນຮ້ອຍ ທຽບກັບປີ 2022 ຈຳນວນ 1.533,5 ລ້ານກີບ ຫຼືເທົ່າກັບ 5.1 ສ່ວນຮ້ອຍ ເມື່ອປຽບທຽບກັບຄ່າໃຊ້ຈ່າຍລວມ

ປີ 2023 ບໍລິສັດມີສັດສ່ວນໜີ້ສົງໃສຈະສູນຕໍ່ລາຍຮັບລວມ ເທົ່າກັບ 4,6 ສ່ວນຮ້ອຍ ເມື່ອທຽບກັບປີ 2022 ທີ່ເທົ່າກັບ 4,5 ສ່ວນຮ້ອຍ ຊຶ່ງຖືວ່າມີສັດສ່ວນບໍ່ປ່ຽນແປງສະແດງໃຫ້ເຫັນວ່າຄຸນນະພາບລູກໜີ້ ຂອງບໍລິສັດຍັງຄົງຄືເກົ່າ

### 8.4 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ

ໃນປີ 2023 ແລະ ປີ 2022 ບໍລິສັດມີກຳໄລສຸດທິ ເທົ່າກັບ 9.316,6 ລ້ານກີບ ຫຼື ເທົ່າກັບ 21,3 ສ່ວນຮ້ອຍຂອງລາຍຮັບລວມ ແລະ 1.047,7 ລ້ານກີບ ຫຼື ເທົ່າກັບ 3,1 ສ່ວນຮ້ອຍຂອງລາຍຮັບລວມ ຕາມລຳດັບ ບໍລິສັດ ມີກຳໄລສຸດທິເພີ່ມຂຶ້ນ 8.268,9 ລ້ານກີບ ຫຼື ເທົ່າກັບ 789,2 ສ່ວນຮ້ອຍ.

### 8.5 ພາສີອາກອນ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປ ລາວ. ດັ່ງນັ້ນ, ບໍລິສັດ ມີໜ້າທີ່ມອບພັນທະອາກອນໃຫ້ກັບລັດຖະບານລາວ ປະກອບດ້ວຍ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນລາຍໄດ້ອື່ນໆ, ອາກອນລາຍໄດ້ຈາກຄ່າເຊົ່າ ແລະ ອາກອນກຳໄລ ປີ 2023 ບໍລິສັດໄດ້ນຳສົ່ງອາກອນແລ້ວ ເປັນຈຳນວນ 1.643,9 ລ້ານກີບ ໃນນີ້ມີຄື:

| ລ/ດ | ລາຍການ | ລ້ານກີບ |
|---|---|---|
| 1 | ອາກອນມູນຄ່າເພີ່ມ | 187,1 |
| 2 | ອາກອນເງິນເດືອນ | 1.112,8 |
| 3 | ອາກອນລາຍໄດ້ອື່ນໆ | 73,7 |
| 4 | ອາກອນລາຍໄດ້ຈາກຄ່າເຊົ່າ ແລະ ອື່ນໆ | 61,3 |
| 5 | ອາກອນກຳໄລ | 209,0 |
| ລວມການມອບພັນທະອາກອນ | | 1.643,9 |

## 9. ຖານະການເງິນຂອງບໍລິສັດ

### 9.1 ຊັບສິນ

ໃນປີ 2023 ແລະ ປີ 2022 ບໍລິສັດມີຊັບສິນທັງໝົດ 997.591,4 ລ້ານກີບ ແລະ 109.061,0 ລ້ານກີບ ຊັບສິນຫຼາຍທີ່ສຸດ ເປັນເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຈຳນວນ 904.775,9 ລ້ານກີບ ທຽບກັບປີ 2022 ຈຳນວນ 6.679,1 ລ້ານກີບ ເພີ່ມຂຶ້ນ 898.096,8 ລ້ານກີບ ຊຶ່ງທຽບເທົ່າກັບ 90.7 ສ່ວນຮ້ອຍ ແລະ 6.1 ສ່ວນຮ້ອຍ ເມື່ອທຽບກັບຊັບສິນລວມ.

ຕາຕະລາງ: ຊັບສິນທັງໝົດ

| ໃບສະແດງຖານະທາງການເງິນ | 31 ທັນວາ 2023 | | 31 ທັນວາ 2022 | |
|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % |
| **ຊັບສິນໝູນວຽນ** | | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 904.775,9 | 90,7 | 6.679,1 | 6,1 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ | 63.329,8 | 6,3 | 56.170,1 | 51,6 |
| ຊັບສິນລໍຖ້າການຂາຍ | 155,4 | 0,00 | 261,6 | 0,2 |
| ຊັບສິນໝູນວຽນອື່ນ | 1.656.5 | 0,2 | 676,7 | 0,6 |
| **ລວມ ຊັບສິນໝູນວຽນ** | **969.917,6** | **97,2** | **63.787,6** | **58,5** |
| **ຊັບສິນ ບໍ່ໝູນວຽນ** | | | | |
| ເງິນຄ້ຳປະກັນເງິນກູ້ | 2.000,0 | 0,2 | 2.000,0 | 1,8 |
| ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ | 2.000,0 | 0,2 | 2.000,0 | 1,8 |
| ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ | 22.893,8 | 2,3 | 40.436,8 | 37,1 |
| ສ່ວນປັບປຸງອາຄານ ແລະ ອຸປະກອນ | 719,4 | 0,1 | 649,6 | 0,6 |
| ຊັບສິນທີ່ບໍ່ມີຕົວຕົນ | 52,9 | 0,0 | 129,3 | 0,1 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 7,6 | 0,0 | 57,7 | 0,1 |
| **ລວມ ຊັບສິນບໍ່ໝູນວຽນ** | **27.673,8** | **2,8** | **45.273,4** | **41,5** |
| **ລວມຊັບສິນ** | **997.591,4** | **100,0** | **109.061,0** | **100,0** |

### 9.1.1 ຊັບສິນໝູນວຽນ

ໃນປີ 2023 ແລະ ປີ 2022 ບໍລິສັດ ມີຊັບສິນໝູນວຽນ ເທົ່າກັບ 969.917,6 ລ້ານກີບ 63.787,7 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 97,2 ສ່ວນຮ້ອຍ ແລະ 58,5 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ໂດຍຊັບສິນໝູນວຽນຫຼັກໄດ້ແກ່ ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຈຳນວນ 904.775,9 ລ້ານກີບ ແລະ 6.679.1 ລ້ານກີບ ຫຼື ເທົ່າກັບ 90,7 ສ່ວນຮ້ອຍ ແລະ 6,1 ສ່ວນຮ້ອຍຂອງຊັບສິນລວມ ຕາມລຳດັບ.ນອກນັ້ນ ຍັງມີລາຍການຊັບສິນໝູນວຽນປະກອບດ້ວຍ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ ເທົ່າກັບ 63.329,8 ລ້ານກີບ ແລະ 56.170,1 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 6,3 ສ່ວນຮ້ອຍ ແລະ 51,6 ສ່ວນຮ້ອຍຂອງຊັບສິນລວມຕາມລຳດັບ. ຊັບສິນລໍຖ້າການຂາຍ ເທົ່າກັບ 155,4 ລ້ານກີບ ແລະ 261,7 ລ້ານກີບ ຫຼື ເທົ່າກັບ 0,0 ສ່ວນຮ້ອຍ ແລະ 0,2 ສ່ວນຮ້ອຍ ຂອງຊັບສິນລວມ. ຊັບສິນໝູນວຽນອື່ນໆ ເທົ່າກັບ 1.656.5ລ້ານກີບ ແລະ 676,7 ລ້ານກີບ ຫຼື ເທົ່າກັບ 0,2 ສ່ວນຮ້ອຍ ແລະ 0,6 ສ່ວນຮ້ອຍ ຂອງຊັບສິນລວມ. ການເພີ່ມຂຶ້ນຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ ເກີດຈາກການກູ້ຢືມເງິນມາເພື່ອຂະຫຍາຍທຸລະກິດໃນອານາຄົດ.

### 9.1.2 ຊັບສິນບໍ່ໝູນວຽນ

ໃນປີ 2023 ແລະ ປີ 2022 ບໍລິສັດມີຊັບສິນບໍ່ໝູນວຽນເທົ່າກັບ 27.673,8 ລ້ານກີບ ແລະ 45.273,4 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 2,8 ສ່ວນຮ້ອຍ ແລະ 41,5 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ຊຶ່ງສາມາດສະແດງໃຫ້ເຫັນວ່າ ຊັບສິນບໍ່ໝູນວຽນມີການຫຼຸດລົງ ໂດຍຊັບສິນບໍ່ໝູນວຽນຫຼັກທີ່ຫຼຸດລົງໄດ້ແກ່ ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ເທົ່າກັບ 22.893,8 ລ້ານກີບ ແລະ 40.436,8 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 2,3 ສ່ວນຮ້ອຍ ແລະ 37,1 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ

ນອກນັ້ນຍັງມີລາຍການຊັບສິນໝູນວຽນຍັງປະກອບດ້ວຍ ເງິນຝາກທີ່ທະນາຄານແຫ່ງ ສປປ. ລາວ ເທົ່າກັບ 2.000,0 ລ້ານກີບ ແລະ 2.000,0 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 0,2 ສ່ວນຮ້ອຍ ແລະ 1,8 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ. ສ່ວນປັບປຸງອາຄານ ແລະ ອຸປະກອນ ເທົ່າກັບ 719,4 ລ້ານກີບ ແລະ 649,6 ຫຼື ເທົ່າກັບ 0,1 ສ່ວນຮ້ອຍ ແລະ 0,6 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ.

## 9.2 ໜີ້ສິນລວມ

ໃນປີ 2023 ແລະ ປີ 2022, ບໍລິສັດມີໜີ້ສິນທັງໝົດ ເທົ່າກັບ 917.355,6 ລ້ານກີບ ແລະ 38.141,7 ລ້ານກີບ ຕາມລຳດັບ ຊຶ່ງໃນປີ 2023 ບໍລິສັດມີເງິນກູ້ຢືມເງິນ ຈຳນວນ 908.805,5 ລ້ານກີບ ເພື່ອສຳຫຼັບການຂະຫຍາຍກິດຈະການໃນອານາຄົດ.

ຕາຕະລາງ: ໜີ້ສິນທັງໝົດ

| ໃບສະແດງຖານະທາງການເງິນ | 31 ທັນວາ 2023 | | 31 ທັນວາ 2022 | |
|---|---|---|---|---|
| | ລ້ານກີບ | % | ລ້ານກີບ | % |
| **ໜີ້ສິນ** | | | | |
| **ໜີ້ສິນໝູນວຽນ** | | | | |
| ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ | 6.968,0 | 0,7 | 3.586,6 | 9,4 |
| ໜີ້ຕ້ອງສົ່ງອາກອນລາຍຮັບ | 713,0 | 0,1 | 2.541,9 | 6,7 |
| ເງິນກູ້ຢືມ | 908.805,4 | 99,1 | 22,429,3 | 58,8 |
| ໜີ້ສິນໝູນວຽນອື່ນໆ | 50,6 | 0,0 | 46,3 | 0,1 |
| **ລວມໜີ້ສິນໝູນວຽນ** | **916.537,1** | 99,9 | **28.604,1** | **75,0** |
| **ໜີ້ສິນບໍ່ໝູນວຽນ** | | | | |
| ເງິນກູ້ຢືມ | 625,3 | 0,0 | 9.330,0 | 24,5 |
| ໜີ້ສິນບໍ່ໝູນວຽນອື່ນໆ | 193,0 | 0,0 | 207,6 | 0,5 |
| **ລວມໜີ້ສິນບໍ່ໝູນວຽນ** | 818,4 | 0,1 | **9.537,6** | **25,0** |
| **ລວມໜີ້ສິນ** | **917.355,6** | **100,0** | **38.141,7** | **100,0** |

### 9.2.1 ໜີ້ສິນໝູນວຽນ

ໃນປີ 2023 ແລະ ປີ 2022, ບໍລິສັດໄດ້ມີໜີ້ສິນໝູນວຽນ ເທົ່າກັບ 916.537,1 ລ້ານກີບ ແລະ 28.604,1 ລ້ານກີບ ຕາມລໍາດັບ ຫຼື ເທົ່າກັບ 99,9 ສ່ວນຮ້ອຍ ແລະ 75,0 ສ່ວນຮ້ອຍ ໜີ້ສິນທີ່ເພີ່ມຂຶ້ນມາຈາກເງິນກູ້ຢືມ ຈໍານວນ 908.805,4 ລ້ານກີບ

ນອກຈາກນັ້ນ ຍັງມີລາຍການໜີ້ສິນໝູນວຽນປະກອບດ້ວຍ ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ ເທົ່າກັບ 6.968,0 ລ້ານກີບ ແລະ 3.586,6 ລ້ານກີບ ຕາມລໍາດັບ ຫຼື 0,7 ສ່ວນຮ້ອຍ ແລະ 9,4 ສ່ວນຮ້ອຍຕາມລໍາດັບ.

### 9.2.2 ໜີ້ສິນບໍ່ໝູນວຽນ

ໃນປີ 2023 ແລະ ປີ 2022, ບໍລິສັດໄດ້ມີໜີ້ສິນບໍ່ໝູນວຽນ ເທົ່າກັບ 818,4 ລ້ານກີບ ແລະ 9.537,6 ລ້ານກີບ ຕາມລໍາດັບ ຫຼືເທົ່າກັບ 0,1 ສ່ວນຮ້ອຍ ແລະ 25,0 ສ່ວນຮ້ອຍ ຂອງໜີ້ສິນລວມທັງໝົດຕາມລໍາດັບ ຊຶ່ງໜີ້

ສິນບໍ່ໜູນວຽນຫຼຸດລົງຈາກ ເງິນກູ້ຢືມທີ່ຮອດກຳນົດຊຳລະເກີນ 1 ປີ ຈຳນວນ 625,3 ລ້ານກີບ, ແລະ 9.330,0 ລ້ານກີບ ຫຼືເທົ່າກັບ 0,0 ສ່ວນຮ້ອຍ ແລະ 24,5 ສ່ວນຮ້ອຍຕາມລຳດັບ ຫຼືຫຼຸດລົງ ຈຳນວນ 8.704.7 ລ້ານກີບ

## 10. ຜົນດຳເນີນງານດ້ານການຕະຫຼາດ

ໃນຊ່ວງໄລຍະ 5 ປີທີ່ຜ່ານມາຫາປັດຈຸບັນ ໃນການອະນຸມັດສິນເຊື່ອໃຫມ່ທັງລົດຈັກ ແລະ ອື່ນໆ

ຕາຕາລາງການອະນຸມັດສິນເຊື່ອໃຫ່ມ - ຈຳນວນສັນຍາ




ຕາຕາລາງການອະນຸມັດສິນເຊື່ອໃຫ່ມ - ມູນຄ່າຂອງເງິນທີ່ໃຊ້ສິນເຊື່ອ




## 11. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024

### 11.1 ດ້ານການຕະຫຼາດ

ຕາມແຜນງານປະຈຳປີ 2024 ມີນະໂຍບາຍຫຼັກດັ່ງນີ້:

1. ເນັ້ນຂະຫຍາຍທຸລະກິດເຊົ່າສິນເຊື່ອ ຜ່ອນຄຳໃຫ້ເປັນທຸລະກິດຫຼັກ ໂດຍການ ຈັດທຳການຕະຫຼາດທັງໃນຮູບແບບຂອງ On-line ແລະ Off-line Marketing
2. ເປີດພື້ນທີ່ບໍລິການ ແຂວງຈຳປາສັກເພີ່ມຕື່ມ

3. ການອະນຸມັດສິນເຊື່ອໃຫ່ມ ຕາມກະແສເງິນຄົງເຫຼືອຂອງບໍລິສັດ ເຊິ່ງຕາມແຜນງານສະບັບນີ້ ມີແຜນໃນການ ຈັດຫາເງິນກູ້ຢືມໃຫ່ມເພີ່ມຕື່ມ ແຕ່ທັງນີ້ ບໍລິສັດ ຈະຫາຊ່ອງທາງໃນການຫາແຫ່ງເງິນທັງຮູບແບບຂອງເງິນກູ້ ຢືມ(Loan) ແລະ ຮຸ້ນກູ້ (Corporate Bond) ເຊິ່ງເມື່ອມີຊ່ອງທາງທີ່ຊັດເຈນແລ້ວ ບໍລິສັດ ຈະທົບທວນ ແຜນການຕາມແຫ່ງເງິນທີ່ບໍລິສັດ ຫາເພີ່ມຕື່ມໄດ້

### 11.2 ເງິນກູ້ຢືມ ແລະ ການຈ່າຍຄືນເງິນກູ້

ຕາມແຜນງານປະຈະປີ 2024 ນັ້ນບໍລິສັດຈະມີແຜນການຈ່າຍຄືນເງິນກູ້ທີ່ຈະຄົບກຳນົດຊຳລະ ຈຳນວນ 400.000 ໂດລາສະຫະລັດ ທັງນີ້ບໍລິສັດ ຢູ່ລະຫວ່າງການຈັດແຫ່ງເງິນກູ້ເພີ່ມຕືມ ເພື່ອນຳມາຂະຫຍາຍທຸລະກິດ ທັງໃນຮູບແບບເງິນກູ້ ຢືມ (Loan) ແລະ ຮຸ້ນກູ້ (Corporate Bond) ຖ້າບໍລິສັດ ສາມາດ ຈັດຫາແຫ່ງເງິນກູ້ຢືມໃຫ່ມໄດ້ ບໍລິສັດຈະທົບທວນແຜນງານປະຈຳປີເພີ່ມເຕີມຕໍ່ໄປ

### 11.3 ການລົງທຶນ

| ປະເພດຂອງການລົງທຶນ | ກີບ |
|---|---|
| ອາຄານສຳນັກງານ ແລະ ຄ່າຕົກແຕ່ງ | - |
| ຍານພາຫະນະ | 650.000.000 |
| ອຸປະກອນຄອມພິວເຕີທັງ Hardware ແລະ Software | 175.000.000 |
| ອຸປະກອນສຳນັກງານ | 975.000.000 |
| ງົບປະມານຈັດຫາອຸປະກອນເຄື່ອງໃຊ້ໃນການເປີດສາຂາໃຫ່ມ | 195.000.000 |
| **ລວມທັງໝົດ** | **1.995.000.000** |

### 11.4 ພະນັກງານ

| ພະນັກງານ | (ອັດຕາ) |
|---|---|
| ຈຳນວນຜູ້ບໍລິຫານ | 3 |
| ຈຳນວນຫົວໜ້າໜ່ວຍງານ | 24 |
| ຈຳນວນພະນັກງານທົ່ວໄປ | 83 |
| **ທັງໝົດ** | **109** |

ສິ້ນສຸດປີ 2024, ບໍລິສັດ ມີພະນັກງານທັງໝົດ 109 ຄົນ ເຊິ່ງຫຼຸດລົງຈາກປີ 2023 ຈຳນວນ 3 ອັດຕາ ຊຶ່ງມີລາຍຈ່າຍກ່ຽວກັບພະນັກງານທັງໝົດ ຈຳນວນ 16.507.3 ລ້ານກີບ

**ຜູ້ອຳນວຍການ**

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

.............................

(ທ່ານ ມານິບ ຕຣີລົດວິໄລ)